ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

21-24 ທັນວາ 2022
ປີທີ 11
ສະບັບທີ 901

## ສສຊ ພິຈາລະນາຮ່າງກົດໝາຍສະບັບປັບປຸງ 2 ສະບັບ ແລະ ສ້າງໃໝ່ 1 ສະບັບ




(ສພຊ) ລະຫວ່າງວັນທີ 19-20 ທັນວາ 2022 ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ພິຈາລະນາກົດໝາຍສະບັບປັບປຸງ ຈຳນວນ 2 ສະບັບ ແລະ ສ້າງໃໝ່ 1 ສະບັບ ພາຍໃຕ້ການຜັດປ່ຽນເປັນປະທານກອງປະຊຸມຂອງບັນດາທ່ານຮອງປະທານສະພາແຫ່ງຊາດ ໂດຍແມ່ນທ່ານ ຄຳໃບ ດຳລັດ, ທ່ານ ພຈທ. ສຸວອນ ເລືອງບຸນມີ ແລະ ທ່ານ ສົມມາດ ພົລເສນາ; ເຂົ້າຮ່ວມມີບັນດາທ່ານຄະນະປະທານກອງປະຊຸມ, ລັດຖະມົນຕີກະຊວງສາທາລະນະສຸກ, ບັນດາທ່ານສະມາຊິກສະພາແຫ່ງຊາດ(ສສຊ)18ເຂດເລືອກຕັ້ງທົ່ວປະເທດ ພ້ອມດ້ວຍຄະນະຮັບຜິດຊອບຮ່າງກົດໝາຍ.

ໃນວາລະກອງປະຊຸມ, ທ່ານ ປອ. ດຣ. ບຸນແຝງ ພູມມະໄລສິດ ລັດຖະມົນຕີກະຊວງສາທາລະນະສຸກ ໄດ້ສະເໜີຮ່າງກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມພະຍາດຕິດຕໍ່ (ປັບປຸງ), ທ່ານ ສຈ. ບໍ່ວຽງຄຳ ວົງດາລາ ລັດຖະມົນຕີກະຊວງເຕັກໂນໂລຊີ ແລະ ການສື່ສານ ໄດ້ສະເໜີຮ່າງກົດໝາຍວ່າດ້ວຍທຸລະກຳທາງເອເລັກໂຕຣນິກ (ປັບປຸງ) ແລະ ທ່ານ ວຽງສະຫວັດ ສີພັນດອນ ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ ໄດ້ສະເໜີຮ່າງກົດໝາຍວ່າດ້ວຍການທາງນ້ຳ (ສ້າງໃໝ່) ເຊິ່ງບັນດາທ່ານໄດ້ຍົກໃຫ້ເຫັນເຫດຜົນ ແລະ ຄວາມຈຳເປັນໃນການປັບປຸງກົດໝາຍທັງສອງສະບັບ ເປັນຕົ້ນແມ່ນ ກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມພະຍາດຕິດຕໍ່ ເຫັນວ່າ: ຜ່ານການຈັດຕັ້ງປະຕິບັດກົດໝາຍສະບັບດັ່ງກ່າວ ໃນໄລຍະຜ່ານມາ ໂດຍສະເພາະການປະເຊີນໜ້າກັບການແຜ່ລະບາດຂອງພະຍາດໂຄວິດ-19 ແລ້ວ ເຫັນວ່າຍັງມີຫລາຍເນື້ອໃນບໍ່ທັນແທດເໝາະກັບສະພາບຕົວຈິງ ແລະ ບໍ່ສອດຄ່ອງກັບເງື່ອນໄຂຂອງການພັດທະນາເສດຖະກິດ-ສັງຄົມ ໃນປັດຈຸບັນ, ຍັງມີບາງເນື້ອໃນທີ່ບໍ່ທັນລະອຽດ, ຈະແຈ້ງ ເຮັດໃຫ້ມີຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິ

ອ່ານຕໍ່ໜ້າ 7

## ໄລຍະຜ່ານມາ, ກຳມາທິການກົດໝາຍ ສາມາດຍາດໄດ້ຜົນງານພົ້ນເດັ່ນຫລາຍດ້ານ



(ສພຊ) ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ, ປະທານກຳມາທິການກົດໝາຍ ໄດ້ໃຫ້ສຳພາດແກ່ສື່ມວນຊົນໃນໂອກາດເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໃນວັນທີ 14 ທັນວາ 2022 ເຊິ່ງທ່ານໄດ້ຍົກໃຫ້ເຫັນໂດຍສັງເຂບກ່ຽວກັບການເຄື່ອນໄຫວວຽກງານທີ່ຜ່ານມາ ແລະ ແຜນການໃນຕໍ່ໜ້າຂອງກຳມາທິການກົດໝາຍ (ກກໝ) ວ່າ: ການແມ່ນກົງຈັກການຈັດຕັ້ງໜຶ່ງ ຂອງສະພາແຫ່ງຊາດ ປະຕິບັດພາລະບົດບາດເປັນເສນາທິການ ໃຫ້ແກ່ສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ ໃນການສ້າງ, ປັບປຸງກົດໝາຍ, ໂຄສະນາເຜີຍແຜ່ລັດຖະທຳມະນູນ ແລະ ກົດໝາຍ, ຕີຄວາມໝາຍ ແລະ ອະທິບາຍກົດໝາຍ, ຕິດຕາມກວດກາການເຄົາລົບ, ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິ

ອ່ານຕໍ່ໜ້າ 2

## ລັດຖະມົນຕີກະຊວງປ້ອງກັນປະເທດ ສະເໜີປັບປຸງ ກົດໝາຍວ່າດ້ວຍອົງການໄອຍະການທະຫານ



(ສພຊ) ວັນທີ 15 ທັນວາ ຜ່ານມານີ້, ທ່ານ ພົອ. ຈັນສະໝອນ ຈັນຍາລາດ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງປ້ອງກັນປະເທດ ໄດ້ສະເໜີຮ່າງກົດໝາຍວ່າດ້ວຍອົງການໄອຍະການທະຫານ (ສະບັບປັບປຸງ) ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງທ່ານໄດ້ຍົກໃຫ້ເຫັນເຖິງເຫດຜົນ ແລະ ຄວາມຈຳເປັນ ໃນການປັບປຸງກົດໝາຍສະບັບດັ່ງກ່າວວ່າ:

1. ໃນປີ 2018 ຄະນະບໍລິຫານງານສູນກາງພັກ ໄດ້ອອກມະຕິສະບັບເລກທີ 037/ຄບສພ, ລົງວັນທີ 18 ມິຖຸນາ 2018 ວ່າດ້ວຍການຍົກສູງປະສິດທິພາບການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ ແລະ ໃນປີ 2020 ກົມການເມືອງສູນກາງພັກ ໄດ້ອອກມະຕິສະບັບເລກທີ 112/ກມສພ, ລົງວັນທີ 02 ມິຖຸນາ 2020 ວ່າດ້ວຍການຍົກສູງຄຸນນະພາບການດຳເນີນຄະດີ ຕາມຂະບວນຍຸຕິທຳ; ສະນັ້ນ, ຈຶ່ງມີຄວາມຈຳເປັນ

ອ່ານຕໍ່ໜ້າ 7

## ສະເໜີປັບປຸງກົດໝາຍວ່າດ້ວຍການກວດສອບແຫ່ງລັດ




(ສພຊ) ວັນທີ 15 ທັນວາ ຜ່ານມານີ້, ທ່ານ ວຽງທະວີສອນ ເທບພະຈັນ ປະທານອົງການກວດສອບແຫ່ງລັດ ໄດ້ສະເໜີການປັບປຸງກົດໝາຍວ່າດ້ວຍການກວດສອບແຫ່ງລັດ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງທ່ານໄດ້ຍົກໃຫ້ເຫັນເຖິງເຫດຜົນ ແລະ ຄວາມຈຳເປັນ ໃນການປັບປຸງກົດໝາຍສະບັບດັ່ງກ່າວວ່າ: ຜ່ານການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການກວດສອບແຫ່ງລັດ ໃນໄລຍະຜ່ານມາ ປາກົດເຫັນວ່າການກຳນົດເນື້ອໃນບາງມາດຕາ ຍັງບໍ່ຄົບຖ້ວນ, ບໍ່ຮັດກຸມ, ບໍ່ຈະແຈ້ງ, ບໍ່ຊັດເຈນ ເຮັດໃຫ້ການຕີຄວາມໝາຍຕໍ່ບາງເນື້ອໃນບໍ່ເປັນເອກະພາບກັນ ຫລື ບໍ່ໄປໃນທິດທາງດຽວກັນ, ການກຳນົດສາຍພົວພັນ, ພາລະບົດບາດ ລະຫວ່າງ ອົງການກວດສອບແຫ່ງລັດ ແລະ ບາງອົງການອຳນາດລັດ ທີ່ເຄື່ອນໄຫວໃນວຽກງານທີ່ກ່ຽວພັນກັນ ໂດຍສະເພາະໃນວຽກງານແກ້ໄຂຜົນການກວດສອບຍັງບໍ່ຊັດເຈນເຮັດໃຫ້ການນຳໄປຈັດຕັ້ງຜັນຂະຫຍາຍພົບຂໍ້ຫຍຸ້ງຍາກ

ອ່ານຕໍ່ໜ້າ 8

## ຄະນະມິດຕະພາບລາວ-ໄທ ສະຫລຸບວຽກງານ 5 ປີ



(ສພຊ) ວັນທີ 15 ທັນວາ 2022 ທີ່ສະພາແຫ່ງຊາດ, ຄະນະມິດຕະພາບລັດຖະສະພາລາວ ແລະ ໄທ ໄດ້ຈັດກອງປະຊຸມສະຫລຸບແຜນການເຄື່ອນໄຫວ ແລະ ວາງທິດທາງແຜນການໃນຕໍ່ໜ້າ ໂດຍການເປັນປະທານຂອງທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ປະທານຄະນະມິດຕະພາບລັດຖະສະພາລາວ ແລະ ໄທ, ມີບັນດາທ່ານຮອງຄະນະມິດຕະພາບ ແລະ ບັນດາທ່ານຄະນະມິດຕະພາບລາວ ແລະ ໄທ ເຂົ້າຮ່ວມ.

ທັງນີ້, ເພື່ອເປັນການສະຫລຸບວຽກງານການເຄື່ອນໄຫວຂອງຄະນະມິດຕະພາບລັດຖະສະພາ ລາວ

ອ່ານຕໍ່ໜ້າ 2


ໜ້າ 4



ໜ້າ 4



ໜ້າ 4


ໜ້າ 4


ໜ້າ 5


ໜ້າ 5

ຊົມເຊີຍກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຢ່າງສຸດໃຈ!

## ໄລຍະ...

ຂອງຄະນະປະຈຳສະພາແຫ່ງຊາດ ແລະ ອື່ນໆ ດ້ວຍການປະຕິບັດສິດ ແລະ ໜ້າທີ່ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບເລກທີ 64/ສພຊ, ລົງວັນທີ 9 ທັນວາ 2015; ມະຕິ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 164/ຄປຈ, ລົງວັນທີ 05 ກໍລະກົດ 2021. ສະນັ້ນ, ໃນໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 3 ຫາເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ກກໝ ສາມາດຍາດໄດ້ຜົນງານທີ່ພົ້ນເດັ່ນຄື: ໃນໄລຍະ 6 ເດືອນທີ່ຜ່ານມາ (ແຕ່ກອງປະຊຸມສະໄໝສາມັນເທື່ອທີ 3 ຫາເທື່ອທີ 4), ພະນັກງານ, ສະມາຊິກພັກ, ລັດຖະກອນ ຂອງ ກກໝ ໄດ້ບາກບັ່ນ, ບຸກບືນ, ຜ່ານຜ່າອຸປະສັກຕ່າງໆ ສູ້ຊົນຈັດຕັ້ງປະຕິບັດສິດ, ໜ້າທີ່ ແລະ ວຽກງານສຳຄັນຫລາຍຢ່າງພົ້ນເດັ່ນຄື:

ກ່ຽວກັບວຽກງານສ້າງ ແລະ ປັບປຸງກົດໝາຍ: ກກໝ ໄດ້ຕັ້ງໜ້າຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ຂອງຕົນ ດ້ວຍຄວາມຮັບຜິດຊອບສູງ ເປັນເຈົ້າການປະສານສົມທົບກັບບັນດາກຳມາທິການຂອງສະພາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດແຜນການສ້າງ ແລະ ປັບປຸງກົດໝາຍ ທີ່ໄດ້ນຳເຂົ້າພິຈາລະນາ, ຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 3 ແລະ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຈຳນວນ 21 ສະບັບ ດັ່ງນີ້:

- ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ຈຳນວນ 9 ສະບັບ, ສ້າງໃໝ່ 3 ສະບັບ, ປັບປຸງ 6 ສະບັບ; ໃນນັ້ນ, ກົດໝາຍສ້າງໃໝ່ 3 ສະບັບ ຄື: ຮ່າງກົດໝາຍວ່າດ້ວຍວິຈິດສິນ; ຮ່າງກົດໝາຍວ່າດ້ວຍຄວາມປອດໄພຂອງເຂື່ອນ; ຮ່າງກົດໝາຍວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ ແລະ ກົດໝາຍປັບປຸງ 6 ສະບັບ ຄື: ກົດໝາຍວ່າດ້ວຍຊັບສິນຂອງລັດ; ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ; ກົດໝາຍວ່າດ້ວຍການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ; ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສານປະຊາຊົນ; ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ.

ຮ່າງກົດໝາຍ ຈຳນວນ 9 ສະບັບນີ້ ປະຈຸບັນນີ້ ທ່ານປະທານປະເທດ ໄດ້ອອກລັດຖະດຳລັດປະກາດໃຊ້ແລ້ວ ຈຳນວນ 7 ສະບັບ ແລະ ຍັງຈະປະກາດໃຊ້ຕື່ມອີກ ຈຳນວນ 2 ສະບັບໃນມໍ່ໆນີ້.

- ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ພວມດຳເນີນນີ້ ຈະໄດ້ພິຈາລະນາຮັບຮອງເອົາກົດໝາຍ ຈຳນວນ 12 ສະບັບ, ໃນນີ້ສ້າງໃໝ່ 3 ສະບັບ, ປັບປຸງ 9 ສະບັບ; ໃນນີ້, ກົດໝາຍສ້າງໃໝ່ 3 ສະບັບ ຄື: ກົດໝາຍວ່າດ້ວຍການທາງນ້ຳ; ກົດໝາຍວ່າດ້ວຍໜັງສືຜ່ານແດນ; ກົດໝາຍວ່າດ້ວຍພິພິທະພັນ ແລະ ກົດໝາຍປັບປຸງ 9 ສະບັບ ຄື: ກົດໝາຍວ່າດ້ວຍທະບຽນສານ; ກົດໝາຍວ່າດ້ວຍທະນາຍຄວາມ; ກົດໝາຍວ່າດ້ວຍວິສາຫະກິດ; ກົດໝາຍວ່າດ້ວຍວິທະຍາສາດ ແລະ ເຕັກໂນໂລຊີ; ກົດໝາຍວ່າດ້ວຍທຸລະກຳທາງເອເລັກໂຕຣນິກ; ກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມພະຍາດຕິດຕໍ່; ກົດໝາຍວ່າດ້ວຍອົງການໄອຍະການທະຫານ; ກົດໝາຍວ່າດ້ວຍການກວດສອບແຫ່ງລັດ ແລະ ກົດໝາຍວ່າດ້ວຍການກວດກາລັດ.

ສຳລັບຮ່າງກົດໝາຍ ຈຳນວນ 12 ສະບັບນີ້, ກກໝ ໄດ້ເປັນເຈົ້າການປະສານສົມທົບກັບບັນດາກຳມາທິການຂອງສະພາແຫ່ງຊາດ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງສຳມະນາ, ທາບທາມຄວາມເຫັນ ຂອງບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພາກສ່ວນກ່ຽວຂ້ອງ ໃນ 6 ຈຸດທົ່ວປະເທດ, ຫລັງຈາກນັ້ນ, ໄດ້ປັບປຸງຄືນໃໝ່ ແລະ ນຳອອກຜ່ານກອງປະຊຸມຄົບຄະນະຂອງ ກກໝ ແລະ ກອງປະຊຸມຍົກສູງຄຸນນະພາບທາງດ້ານເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລ້ວຈຶ່ງນຳມາພິຈາລະນາຢູ່ໃນກອງປະຊຸມຄັ້ງນີ້; ນອກຈາກນີ້ແລ້ວ, ກກໝ ຍັງໄດ້ເປັນເຈົ້າການປະສານສົມທົບກັບບັນດາກຳມາທິການ ຂອງສະພາແຫ່ງຊາດ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າ ແລະ ສະເໜີປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍ ຂອງສະພາແຫ່ງຊາດ ຊຸດທີ IX ໃນໄລຍະແຕ່ປີ 2022-2023 ເຊິ່ງຈະນຳລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ພິຈາລະນາຮັບຮອງ.

ກ່ຽວກັບວຽກງານຕິດຕາມກວດກາ, ໂຄສະນາ ແລະ ຕີຄວາມໝາຍກົດໝາຍ: ຄຽງຄູ່ກັບການຈັດຕັ້ງປະຕິບັດວຽກງານສ້າງ ແລະ ປັບປຸງກົດໝາຍ ທີ່ກ່າວມາຂ້າງເທິງນີ້, ກກໝ ໄດ້ເປັນເຈົ້າການປະສານສົມທົບກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງໃນການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ຄື: ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍຊັບສິນຂອງລັດ ແລະ ກົດໝາຍວ່າດ້ວຍແຮ່ທາດ ທີ່ຕິດພັນກັບວາລະແຫ່ງຊາດ ແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງເປັນຄັ້ງທຳອິດທີ່ໄດ້ມີການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ນັບແຕ່ ສປປລາວ ໄດ້ປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍເປັນຕົ້ນມາ. ປະຈຸບັນໄດ້ຮ່ວມກັບກຳມາທິການຍຸຕິທຳ ໃນການກະກຽມ ແລະ ຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ໃນຂົງເຂດຍຸຕິທຳ ຄື: ກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ເພື່ອກະກຽມລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX;

- ໄດ້ເຮັດວຽກງານໂຄສະນາເຜີຍແຜ່ລັດຖະທຳມະນູນ, ກົດໝາຍ ຈຳນວນ 1 ຄັ້ງ ແລະ ນິຕິກຳໃຕ້ກົດໝາຍຂອງສະພາແຫ່ງຊາດ ຈຳນວນ 3 ຄັ້ງ ໃຫ້ພະນັກງານ-ລັດຖະກອນ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ມີຜູ້ເຂົ້າຮ່ວມທັງໝົດ 260 ທ່ານ, ຍິງ 72 ທ່ານ.
- ໄດ້ສຳເລັດການກະກຽມເນື້ອໃນຕ່າງໆ ແລະ ໄປປາຖະກະຖາຢູ່ບັນດາກະຊວງ-ອົງການ ໃນໂອກາດສະເຫລີມສະຫລອງວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 31 ປີ.
- ໄດ້ຂຶ້ນຫ້ອງປາຖະກະຖາກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ແກ່ກຳລັງປະກອບອາວຸດ ຢູ່ກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ.
- ໄດ້ຄົ້ນຄວ້າການສະເໜີໃຫ້ຕີຄວາມໝາຍ ແລະ ແຈ້ງຕອບພາກສ່ວນທີ່ກ່ຽວຂ້ອງ ທັງໝົດ 5 ບັນຫາ ກວມເອົາ 5 ກົດໝາຍ ຄື: 1) ນິຍາມຂອງເອກະສານປອມ, ການນຳໃຊ້ເອກະສານປອມ, ເອກະສານສະບັບຕົ້ນ, ເອກະສານສະບັບກອບປີ້ ແລະ ການນັບອາຍຸຄວາມໃນການຮ້ອງຟ້ອງໃນສະຖານການປອມແປງເອກະສານ ຫລື ການໃຊ້ເອກະສານປອມ, ອາຍຸຄວາມໃນການຮ້ອງຟ້ອງ ຕາມມາດຕາ 31 ຂອງປະມວນກົດໝາຍອາຍາ; 2) ມາດຕາ 120 ວັກໜຶ່ງ ຂອງກົດໝາຍວ່າດ້ວຍທີ່ດິນ ແລະ ມາດຕາ 42 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ; 3) ມາດຕາ 12 ວັກສາມ ຂອງກົດໝາຍວ່າດ້ວຍຄອບຄົວ; 4) ການເກີດສິດ ແລະ ພັນທະຕາມສັນຍາ; 5) ການສະເໜີຂໍຄຳເຫັນແນະນຳການນຳໃຊ້ກົດໝາຍ ສະບັບເກົ່າ ແລະ ສະບັບໃໝ່.
- ໄດ້ຄົ້ນຄວ້າອອກມະຕິຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ;
- ດຳເນີນກອງປະຊຸມຄົບຄະນະກຳມາທິການກົດໝາຍ ປະຈຳປີ 2022 ແລະ ວາງທິດທາງວຽກງານສຳລັບປີ 2023.

ສະມາຊິກສະພາແຫ່ງຊາດ ທີ່ສັງກັດ ກກໝ ມີຈຳນວນ 25 ທ່ານ ເຊິ່ງປະຈຳຄົບໃນ 18 ເຂດເລືອກຕັ້ງທົ່ວປະເທດ. ພາຍ

ຫລັງສຳເລັດກອງປະຊຸມສະໄໝສາມັນ ແລະ ວິສາມັນ ຂອງສະພາແຫ່ງຊາດ ຊຸດທີ IX ແລ້ວ, ບັນດາທ່ານສະມາຊິກສະພາແຫ່ງຊາດ ສັງກັດ ກກໝ ໄດ້ພົດປ່ຽນກັນລົງພົບປະກັບຜູ້ມີສິດເລືອກຕັ້ງຢູ່ໃນເຂດເລືອກຕັ້ງຂອງຕົນ ເພື່ອເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະພາແຫ່ງຊາດແຕ່ລະເທື່ອ ແລະ ເກັບກຳຄວາມເຫັນຕ່າງໆ ຂອງປະຊາຊົນບັນດາເຜົ່າ ພ້ອມທັງໂຄສະນາເຜີຍແຜ່ກົດໝາຍທີ່ຜູ້ມີສິດເລືອກຕັ້ງສົນໃຈ. ການລົງພົບປະແຕ່ລະຄັ້ງກໍ່ມີບັນດາຂໍ້ສະເໜີຂອງປະຊາຊົນເປັນຈຳນວນຫລວງຫລາຍ ແຕ່ອັນທີ່ພົ້ນເດັ່ນ ແລະ ການແກ້ໄຂມີຄວາມຫຍຸ້ງຍາກ ແມ່ນບັນຫາທີ່ດິນ ເປັນຕົ້ນ ຂໍ້ຂັດແຍ່ງທີ່ດິນ, ການຊົດເຊີຍໂຄງການສຳປະທານທີ່ດິນ ແລະ ອື່ນໆ; ບັນຫາຢາເສບຕິດ ແລະ ການແກ້ໄຂຄະດີຕ່າງໆ, ບັນຫາຕົວເລກລັດຖະກອນຄູອາສາສະໝັກ, ບັນຫາການສ້ອມແປງເສັ້ນທາງຫລວງທີ່ເປ່ເພຍ້ອນລົດບັນທຸກໜັກຂອງບັນດາໂຄງການລົງທຶນຕ່າງໆ ແລະ ອື່ນໆ; ຕໍ່ກັບບັນດາຂໍ້ຄິດຄວາມເຫັນ ແລະ ຂໍ້ສະເໜີຕ່າງໆນັ້ນ ບັນດາທ່ານສະມາຊິກສະພາແຫ່ງຊາດ ສັງກັດກຳມາທິການກົດໝາຍ ໄດ້ເກັບກຳສັງລວມ ແລະ ສະເໜີຕໍ່ອົງການທີ່ກ່ຽວຂ້ອງເພື່ອແກ້ໄຂ; ສຳລັບມາດຕະການ ຫລື ຄາດໝາຍສູ້ຊົນໃນຕໍ່ໜ້ານັ້ນ ກກໝ ຈະໄດ້ສືບຕໍ່ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໃນການຕິດຕາມກວດກາ, ຊຸກຍູ້ ການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຂອງບັນດາກະຊວງ-ອົງການ ໃຫ້ເຂັ້ມງວດກວ່າເກົ່າ; ປັບປຸງບັນດາກົດໝາຍໃຫ້ມີເນື້ອໃນຄົບຖ້ວນ, ຮັດກຸມ ແລະ ສອດຄ່ອງກັບຄວາມເປັນຈິງ; ເປັນເຈົ້າການ ປະສານສົມທົບກັບບັນດາກະຊວງ-ອົງການ ເພື່ອພະຍາຍາມນຳເອົາບັນດາກົດໝາຍທີ່ໄດ້ປະກາດໃຊ້ແລ້ວ ລົງໂຄສະນາເຜີຍແຜ່ໃຫ້ແກ່ປະຊາຊົນໄດ້ຮັບຮູ້ ແລະ ເຂົ້າ ໃຈຢ່າງກວ້າງຂວາງທົ່ວເຖິງ ແນໃສ່ຫັນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍກົດໝາຍໃຫ້ມີປະສິດທິພາບເທື່ອລະກ້າວ;

ທ່ານຍັງໃຫ້ຮູ້ຕື່ມອີກວ່າ: ກອງປະຊຸມຄົບຄະນະຂອງ ກກໝ ຄັ້ງວັນທີ 18 ພະຈິກ 2022 ໄດ້ເປັນເອກະພາບກ່ຽວກັບວຽກງານສຳຄັນຈຳນວນໜຶ່ງ ປີ 2023 ດັ່ງນີ້:

1. ເພີ່ມທະວີວຽກງານສຶກສາອົບຮົມການເມືອງ-ແນວຄິດພາຍໃນກຳມາທິການ ໃຫ້ເປັນເອກະພາບສູງຕໍ່ແນວທາງ, ນະໂຍບາຍຂອງພັກ, ເພື່ອທະວີຄວາມສາມັກຄີເປັນປຶກແຜ່ນພາຍໃນຖັນແຖວສະມາຊິກກຳມາທິການ, ພະນັກງານ, ສະມາຊິກພັກ ແລະ ລັດຖະກອນ, ສູ້ຊົນຈັດຕັ້ງປະຕິບັດໜ້າທີ່ວິຊາສະເພາະໃຫ້ສຳເລັດຕາມແຜນການ.

2. ກ່ຽວກັບວຽກງານສ້າງ ແລະ ປັບປຸງກົດໝາຍ:

- ເປັນເຈົ້າການປະສານສົມທົບກັບ ບັນດາກະຊວງ-ອົງການ ແລະ ສຳນັກງານປະທານປະເທດເພື່ອຮຽບຮຽງເນື້ອໃນກົດໝາຍ ຈຳນວນ 12 ສະບັບ ຕາມການປະກອບຄຳເຫັນຂອງສະມາຊິກສະພາແຫ່ງຊາດ ພາຍຫລັງທີ່ໄດ້ພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ສຳ ເລັດໂດຍໄວ;
- ເພີ່ມທະວີຄວາມເປັນເຈົ້າການປະສານສົມທົບກັບກຳມາທິການທີ່ກ່ຽວຂ້ອງ ຂອງສະພາແຫ່ງຊາດ, ກະຊວງ, ອົງການ ທີ່ຮັບຜິດຊອບສ້າງ ແລະ ປັບປຸງກົດໝາຍ, ກະຊວງຍຸຕິທຳ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຄົ້ນຄວ້າເນື້ອໃນຂອງບັນດາຮ່າງກົດໝາຍທີ່ຈະສ້າງ ແລະ ປັບປຸງ ປີ 2023 ແນໃສ່ເຮັດໃຫ້ຮ່າງກົດໝາຍແຕ່ລະສະບັບ ມີເນື້ອໃນຄົບຖ້ວນ, ຮັດກຸມ, ສຳເລັດຕາມກຳນົດເວລາ ແລະ ສາມາດນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນ ເທື່ອທີ 5 ແລະ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ໄດ້ຕາມແຜນການ.
- ປັບປຸງຮູບການ, ວິທີການ ແລະ ເນື້ອໃນການນຳເອົາບັນດາຮ່າງກົດໝາຍ ທີ່ຈະຮັບຮອງໃນກອງປະຊຸມສະໄໝສາມັນ ປະຈຳປີ 2023 ລົງທາບທາມຄວາມເຫັນໃນທົ່ວປະເທດ ໃຫ້ໄດ້ຮັບຜົນດີກວ່າເກົ່າ.

3. ກ່ຽວກັບວຽກງານຕິດຕາມກວດກາ, ໂຄສະນາ ແລະ ຕີຄວາມໝາຍກົດໝາຍ:

- ສືບຕໍ່ຈັດຕັ້ງປະຕິບັດ ແຜນການຕິດຕາມກວດກາ ປະຈຳປີ 2022 ໂດຍສະເພາະແມ່ນການຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ 6 ສະບັບ ຕິດພັນກັບການໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດມາຍຂົງເຂດສະພາແຫ່ງຊາດ ພ້ອມທັງກຳນົດແຜນການຕິດຕາມກວດກາ ປະຈຳປີ 2023 ຂອງກຳມາທິການກົດໝາຍໃຫ້ສຳເລັດຕາມຄາດໝາຍທີ່ວາງໄວ້;
- ສືບຕໍ່ປະສານສົມທົບກັບບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ ເພື່ອຊຸກຍູ້ວຽກງານໂຄສະນາ, ເຜີຍແຜ່ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃຫ້ກວ້າງຂວາງກວ່າເກົ່າ; ກະກຽມສະເຫລີມສະຫລອງວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 32 ປີ (15 ສິງຫາ 1991-15 ສິງຫາ 2023).
- ສືບຕໍ່ຄົ້ນຄວ້າ ການຕີຄວາມໝາຍ ແລະ ອະທິບາຍກົດໝາຍ ຕາມການສະເໜີຂອງພາກສ່ວນທີ່ກ່ຽວຂ້ອງໆ ຫລື ໂດຍໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຕີຄວາມໝາຍ ແລະ ອະທິບາຍກົດໝາຍ ສະບັບເລກທີ 30/ຄປຈ, ລົງວັນທີ 07 ກຸມພາ 2022.
- ຮ່ວມກັບກຳມາທິການຍຸຕິທຳ ຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ໃນຂົງເຂດຍຸຕິທຳ ໃຫ້ສຳເລັດຕາມແຜນການ.

ໃນຕອນທ້າຍ, ທ່ານຍັງໄດ້ສະເໜີຕື່ມອີກວ່າ: ໃນໄລຍະພວມດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໂດຍສະເພາະປະຈຸບັນຢູ່ໃນວາລະການພິຈາລະນາຮັບຮອງເອົາບັນດາຮ່າງກົດໝາຍ 12 ສະບັບ ຂໍສະເໜີໃຫ້ບັນດາທ່ານສະມາຊິກສະພາແຫ່ງຊາດ, ຜູ້ແທນກອງປະຊຸມສຸມທຸກສະຕິປັນຍາຄົ້ນຄວ້າ, ປະກອບຄຳເຫັນໃສ່ແຕ່ລະຮ່າງກົດໝາຍ ເພື່ອໃຫ້ມີເນື້ອໃນຄົບຖ້ວນ, ຮັດກຸມ, ແທດເຖິງຕົວຈິງ ແລະ ພາຍຫລັງກອງປະຊຸມຄັ້ງນີ້ ໄດ້ຮັບຮອງແລ້ວ, ສະເໜີໃຫ້ອະນຸກຳມະການຕ່າງໆທີ່ຮັບຜິດຊອບແຕ່ລະຮ່າງກົດໝາຍ ຈຶ່ງພ້ອມກັນຄົ້ນຄວ້າຮຽບຮຽງ ເພື່ອໃຫ້ສາມາດສະເໜີທ່ານປະທານປະເທດ ອອກລັດຖະດຳລັດປະກາດໃຊ້ກົດໝາຍ ຈຳນວນ 12 ສະບັບດັ່ງກ່າວ ໃຫ້ທັນຕາມກຳນົດເວລາທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການສ້າງນິຕິກຳ; ສະເໜີໃຫ້ບັນດາກະຊວງ-ອົງການ ເອົາໃຈໃສ່ແຕ່ຫົວທີໃນການຄົ້ນຄວ້າກວດກາເນື້ອໃນຮອບດ້ານຂອງບັນດາຮ່າງກົດໝາຍທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໂດຍສະເພາະແມ່ນບັນດາຮ່າງກົດໝາຍທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 5 ແລະ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ສຳເລັດໂດຍໄວ ເພື່ອຈັດຕັ້ງປະຕິບັດແຜນການສ້າງ ແລະ ປັບປຸງກົດໝາຍ ປະຈຳປີ 2023 ໃຫ້ສຳເລັດຕາມແຜນການກຳນົດ, ມີປະສິດທິພາບ ແລະ ປະສິດທິຜົນ; ສະເໜີໃຫ້ບັນດາກະຊວງ-ອົງການ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ຈົ່ງເອົາໃຈໃສ່ວຽກງານໂຄສະນາເຜີຍແຜ່ກົດໝາຍຕ່າງໆ ໃຫ້ທົ່ວເຖິງຣາກຖານ ແລະ ປະຊາຊົນ. ພ້ອມນີ້, ຮຽກຮ້ອງໃຫ້ປະຊາຊົນບັນດາເຜົ່າທຸກທົ່ວໜ້າຈົ່ງພ້ອມກັນຍົກສູງສະຕິເຄົາລົບກົດໝາຍ, ປະຕິບັດສິດ ແລະ ພັນທະຂອງພົນລະເມືອງ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ.

## ຄະນະ...

ແລະ ໄທ ໄລຍະ 5 ປີ ຜ່ານມາ (2016-2020) ແລະ ທິດທາງແຜນການເຄື່ອນໄຫວ 5 ປີ (2021-2025) ແລະ ແຜນການປີ 2023 ແລະ ເພື່ອເປັນການແລກປ່ຽນຖອດຖອນບົດຮຽນໃນການປະຕິບັດໜ້າທີ່ເຊິ່ງກັນແລະກັນ ຂອງຄະນະມິດຕະພາບລັດຖະສະພາ ລາວ ແລະ ໄທ.

ກອງປະຊຸມຄັ້ງນີ້, ໄດ້ຮັບຟັງການຜ່ານມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການແຕ່ງຕັ້ງສະມາຊິກສະພາແຫ່ງຊາດ ເຄື່ອນໄຫວຄະນະມິດຕະພາບລັດຖະສະພາ ລະຫວ່າງສະພາແຫ່ງຊາດ ແລະ ລັດຖະສະພາແຫ່ງຣາຊະອານາຈັກໄທ ສະບັບເລກທີ 133/ຄປຈ.ຕສ, ລົງວັນທີ 17/05/2021; ເຜີຍແຜ່ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍພາລະບົດບາດ ແລະ ການເຄື່ອນໄຫວ ຄະນະມິດຕະພາບລັດຖະສະພາ ລະຫວ່າງສະພາແຫ່ງຊາດ ແຫ່ງ ສປປລາວ ກັບລັດຖະສະພາຕ່າງປະເທດ ສະບັບເລກທີ 08/ຄປຈ.ຕສ, ລົງວັນທີ 17/07/2021; ຜົນສຳເລັດການເຄື່ອນໄຫວຂອງຄະນະມິດຕະພາບລັດຖະສະພາລາວ-ໄທ ໄລຍະ 5 ປີ (2021-2025) ແລະ ແຜນຈຸດສຸມປີ 2023 ແລະ ເຜີຍແຜ່ເນື້ອໃນບົດບັນທຶກຄວາມເຂົ້າໃຈ ລະຫວ່າງສະພາແຫ່ງຊາດ ແຫ່ງ ສປປລາວ ແລະ ລັດຖະສະພາ ແຫ່ງຣາຊະອານາຈັກໄທ; ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມ ໄດ້ຜັດປ່ຽນກັນປະກອບຄຳຄິດຄຳເຫັນ ແລະ ປຶກສາຫາລື ກ່ຽວກັບແຜນການປະຈຳປີ 2023.

(ສອນສັກ ວັນວິໄຊ)

# ລາຍງານຄວາມຄືບໜ້າການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ

ອ່ານຕໍ່ຈາກສະບັບກ່ອນ...

● **ການສ້າງສະຖຽນລະພາບໃຫ້ຄ່າເງິນກີບ ສ້າງຄັງສໍາຮອງເງິນຕາຕ່າງປະເທດ ແລະ ຄວບຄຸມອັດຕາເງິນເຟີ້**

- ດ້ານນະໂຍບາຍເງິນຕາ ໄດ້ປັບເພີ່ມອັດຕາດອກເບ້ຍພື້ນຖານຂອງທະນາຄານແຫ່ງ ສປປລາວ ສະກຸນເງິນກີບໄລຍະສັ້ນບໍ່ເກີນ 7 ວັນ 2 ຄັ້ງ ຈາກ 3% ເປັນ 3,1% ຕໍ່ປີ ໃນເດືອນພຶດສະພາ ແລະ ເປັນ 6,5% ຕໍ່ປີໃນເດືອນຕຸລາ; ປັບເພີ່ມອັດຕາສ່ວນເງິນແຮຝາກບັງຄັບ ຈາກ 3% ເປັນ 5% ສໍາລັບສະກຸນເງິນກີບ; ນອກຈາກນັ້ນ, ຍັງໄດ້ອອກພັນທະບັດທະນາຄານແຫ່ງ ສປປລາວ ໄລຍະສັ້ນອາຍຸ 6 ເດືອນ ອັດຕາດອກເບ້ຍ 20% ຕໍ່ປີ ຈໍານວນ 5.000 ຕື້ກີບ ເຊິ່ງມາຮອດປັດຈຸບັນ (ວັນທີ 15 ພະຈິກ 2022) ຍອດຈໍາໜ່າຍບັນລຸໄດ້ 92,28% ຂອງມູນຄ່າຈໍາໜ່າຍທັງໝົດ (ຮອດເດືອນ 9: 88,47%) ເຊິ່ງຊ່ວຍຄວບຄຸມການຂະຫຍາຍຕົວຂອງປະລິມານເງິນຢູ່ໃນລະດັບໜຶ່ງ (ສະເລ່ຍ 0,07% ຕໍ່ວັນ).

- ດ້ານອັດຕາແລກປ່ຽນ, ໄດ້ຄົ້ນຄວ້າຂະຫຍາຍຂອບການເໜັງຕີງຂອງການກໍານົດອັດຕາແລກປ່ຽນປະຈໍາວັນກວ້າງອອກ ຈາກອັດຕາອ້າງອີງຂອງ ທຫລ ຈາກລະດັບ ± 1,5% ມາເປັນ ±3 % ສໍາລັບຮ້ານແລກປ່ຽນຕົວແທນ ແລະ ±4,5% ສໍາລັບທະນາຄານທຸລະກິດ; ພ້ອມດຽວກັນ, ໄດ້ເຂັ້ມງວດກວດກາ ແລະ ປະຕິບັດມາດຕະການຕໍ່ຮ້ານແລກປ່ຽນເງິນຕາຕົວແທນ ແລະ ຫົວໜ່ວຍແລກປ່ຽນເງິນຕາແບບຜິດກົດໝາຍໃຫ້ເປັນຮູບປະທໍາຫລາຍຂຶ້ນ ໂດຍການຖອນໃບອະນຸຍາດຂອງບັນດາຮ້ານແລກປ່ຽນທີ່ດໍາເນີນບໍ່ຖືກລະບຽບ ໂດຍສະເພາະຮ້ານແລກປ່ຽນປະເພດ C, ຈໍາກັດການເຄື່ອນ ໄຫວໂດຍໃຫ້ສາມາດຊື້ໄດ້ຂາເປັນຕົ້ນດຽວນໍາບຸກຄົນ ໃນຈໍານວນວົງເງິນບໍ່ເກີນ 15 ລ້ານ/ຄົນ/ວັນ, ເຊິ່ງໄດ້ເຮັດໃຫ້ຈໍານວນຮ້ານແລກປ່ຽນຕົວແທນຫລຸດລົງຈາກຈໍານວນ 419 ຮ້ານ ມາເປັນ 113 ຮ້ານ (ຫລຸດລົງ 306 ຮ້ານ).

- ໄດ້ສ້າງເງື່ອນໄຂຊຸກຍູ້ຕະຫລາດຊື້-ຂາຍເງິນຕາຕ່າງປະເທດ ລະຫວ່າງທະນາຄານ ໃຫ້ເຄື່ອນໄຫວປົກກະຕິປັບປຸງຕົວຊີ້ວັດສະພາບຄ່ອງດ້ານເງິນຕາຕ່າງປະເທດຂອງທະນາຄານທຸລະກິດໃຫ້ສອດຄ່ອງຂຶ້ນ.

- ປັບປຸງກົນໄກການສະໜອງເງິນຕາຕ່າງປະເທດຂອງລະບົບທະນາຄານໃຫ້ແກ່ການນໍາເຂົ້ານໍ້າມັນເຊື້ອໄຟ ເຊິ່ງໃນໄລຍະ 9 ເດືອນຂອງປີ 2022 ລະບົບທະນາຄານ ໄດ້ສະໜອງເງິນຕາຕ່າງປະເທດ ປະມານ 553,95 ລ້ານໂດລາ (ໃນນັ້ນ ຈາກທະນາຄານແຫ່ງ ສປປລາວ 156,7 ລ້ານໂດລາ ແລະ ທະນາຄານທຸລະກິດ 395,11 ລ້ານໂດລາ) ກວມເອົາ 70,09% ຂອງມູນຄ່າການນໍາເຂົ້າ ເຊິ່ງແມ່ນມູນຄ່າເພີ່ມຂຶ້ນເທົ່າຕົວ ສົມທຽບກັບໄລຍະປີຜ່ານມາ.

● **ການແກ້ໄຂບັນຫາໜີ້ບໍ່ເກີດດອກອອກຜົນ ແລະ ສ້າງຄວາມເຂັ້ມແຂງໃຫ້ສະຖາບັນການເງິນ:**

- ສໍາເລັດການປັບປຸງໂຄງສ້າງທະນາຄານພັດທະນາລາວ ແລະ ທະນາຄານສົ່ງເສີມກະສິກໍາ ໂດຍໃຫ້ບໍລິສັດເອກະຊົນຮ່ວມທຶນຖືຮຸ້ນ 70% ແລະ ລັດຖືຮຸ້ນ 30% ເຊິ່ງໄດ້ເຮັດໃຫ້ທັງສອງທະນາຄານເຄື່ອນໄຫວດໍາເນີນທຸລະກິດດີຂຶ້ນຕາມໂຄງສ້າງໃໝ່ ແລະ ເລີ່ມໄດ້ຮັບຜົນກໍາໄລສຸດທິຈາກການດໍາເນີນທຸລະກິດ (ທະນາຄານພັດທະນາລາວ ມີກໍາໄລສຸດທິ ຈໍານວນ 359 ຕື້ກີບ ແລະ ທະນາຄານສົ່ງເສີມກະສິກໍາ 22,21 ຕື້ກີບ). ສືບຕໍ່ດໍາເນີນການປັບປຸງທະນາຄານນະໂຍບາຍເພື່ອຫັນເປັນທະນາຄານພັດທະນາຊົນນະບົດ.

- ເລັ່ງແກ້ໄຂບັນຫາໜີ້ບໍ່ເກີດດອກອອກຜົນ (NPL) ດ້ວຍການປັບປຸງຄະນະແກ້ໄຂບັນຫາ NPL ໃນແຕ່ລະຂັ້ນສ້າງຄວາມເຂັ້ມແຂງໃຫ້ບັນດາອົງກອນປົ່ນອ້ອມຕ່າງໆ ເປັນຕົ້ນ ວຽກງານການເກັບກູ້ໜີ້ ແລະ ຮັບຝາກເກັບໜີ້, ວຽກງານຂໍ້ມູນຂ່າວສານສິນເຊື່ອ ແລະ ອື່ນໆ. ຮອດທ້າຍເດືອນຕຸລາ 2022, ອັດຕາສ່ວນ NPL ຂອງທະນາຄານທຸລະກິດຫລຸດລົງຢູ່ໃນລະດັບ 2,15% (ຕໍ່າກວ່າລະດັບຄາດໝາຍວາລະແຫ່ງຊາດ 3%).

5. ວຽກຈຸດສຸມດ້ານການຍົກສູງປະສິດທິພາບການຄຸ້ມຄອງລັດດ້ວຍກົດໝາຍ.

- ຄົ້ນຄວ້າສ້າງ ແລະ ປັບປຸງກົດໝາຍ 5 ສະບັບ ແລະ ນິຕິກໍາລຸ່ມກົດໝາຍ ໃນຂົງເຂດເສດຖະກິດ ປະມານ 20 ສະບັບ. ປັດຈຸບັນ ໄດ້ສໍາເລັດການປັບປຸງ ແລະ ຮັບຮອງກົດໝາຍວ່າດ້ວຍຊັບສິນແຫ່ງລັດ ແລະ ກໍາລັງຄົ້ນຄວ້າກົດໝາຍວ່າດ້ວຍການຄຸ້ມຄອງໜີ້ສິນສາທາລະນະ, ກົດໝາຍວ່າດ້ວຍອາກອນສິ່ງແວດລ້ອມ, ກົດໝາຍວ່າດ້ວຍອາກອນທີ່ດິນ ແລະ ສິ່ງກໍ່ສ້າງ ແລະ ອື່ນໆ.

- ສໍາເລັດການຄົ້ນຄວ້າພາລະບົດບາດ ແລະ ກົງຈັກຂັ້ນສູນກາງໄດ້ຈໍານວນ 12 ກະຊວງ ແລະ ອົງການທຽບເທົ່າກະຊວງ; ໄດ້ສໍາເລັດການຄົ້ນຄວ້າປັບປຸງກົງຈັກການຈັດຕັ້ງຂັ້ນກົມ ແລະ ທຽບເທົ່າ ໃນ 17 ກະຊວງ ແລະ 2 ສະຖາບັນ ທີ່ເປັນເປົ້າໝາຍປັບປຸງຕາມທິດກະທັດຮັດ ແລະ ສົມເຫດສົມຜົນ ເຊິ່ງສາມາດຫລຸດຜ່ອນກົງຈັກຂັ້ນກົມລົງ 34 ຫົວໜ່ວຍ ຈາກທັງໝົດ 493 ຫົວໜ່ວຍ ເຫລືອ 459 ຫົວໜ່ວຍ.

- ໄດ້ປັບປຸງກົງຈັກຄຸ້ມຄອງການເກັບລາຍຮັບແຕ່ສູນກາງລົງຮອດທ້ອງຖິ່ນໃນຂະແໜງພາສີ, ສ່ວຍສາອາກອນ, ຄັງເງິນ ແລະ ຂະແໜງອື່ນໆ ເພື່ອແກ້ໄຂຂອດຂັ້ນທີ່ບໍ່ຈໍາເປັນທີ່ເຮັດໃຫ້ການເກັບລາຍຮັບຕົກເຮ່ຍເສຍຫາຍ; ໄດ້ຫັນເອົາພະນັກງານ-ເຈົ້າໜ້າທີ່ຂອງພາສີ, ສວຍສາອາກອນ ແລະ ຄັງເງິນ ໄປສູ່ວິຊາຊີບ ດ້ວຍກົນໄກເຝິກອົບຮົມຕາມຫລັກສູດສະເພາະ; ໄດ້ດໍາເນີນການແກ້ໄຂປະກົດການຫຍໍ້ທໍ້ ດ້ວຍການກວດກາປົກກະຕິ ແລະ ແບບສະເພາະກິດ ຢ່າງຕໍ່ເນື່ອງ.

- ໄດ້ທົດລອງຫັນຫົວໜ່ວຍວິຊາການທີ່ມີລາຍຮັບໄປສູ່ການກຸ້ມຕົນເອງທາງດ້ານງົບປະມານ ມີຈໍານວນ 5ພາກສ່ວນ (ຂະແໜງສຶກສາ 2 ແຫ່ງ ແລະ ສາທາ 3 ແຫ່ງ) ແລະ ເກັບກໍາຂໍ້ມູນຫົວໜ່ວຍວິຊາການຈໍານວນ 17 ພາກສ່ວນ ເພື່ອສຶກສາຄວາມເປັນໄປໄດ້ໃນການຫັນໄປສູ່ກຸ້ມຕົນເອງທາງດ້ານງົບປະມານໃນນັ້ນ, ເຫັນວ່າມີ 53 ພາກສ່ວນມີເງື່ອນໄຂກຸ້ມຕົນເອງໃນຕໍ່ໜ້າ.

- ສືບຕໍ່ປັບປຸງສະພາບແວດລ້ອມ ແລະ ການແກ້ໄຂຄວາມຫຍຸ້ງຍາກ ຂອງການດໍາເນີນທຸລະກິດຕາມບັນດາວຽກຈຸດສຸມ ແລະ ຕົວຊີ້ວັດຂອງຄໍາສັ່ງເລກທີ 02/ນຍ ແລະ ຄໍາສັ່ງເລກທີ 03/ນຍ ເຊິ່ງສາມາດຫລຸດຂັ້ນຕອນ ແລະ ໄລຍະເວລາການອະນຸຍາດດໍາເນີນທຸລະກິດ, ອອກໃບທະບຽນວິສາຫະກິດ ແລະ ເລກບັດປະຈໍາຕົວຜູ້ເສຍອາກອນ ຈາກ 9 ຂັ້ນຕອນມາເປັນ 3 ຂັ້ນຕອນ ແລະ ໃຊ້ເວລາສູງສຸດ 17 ວັນ; ນອກຈາກນັ້ນ, ໄດ້ປັບໜ່ວຍງານປະສານງານການລົງທຶນປະຕູດຽວຢູ່ບັນດາກະຊວງ-ທ້ອງຖິ່ນ ແລະ ຄົ້ນຄວ້າປັບປຸງຮູບແບບ-ກົນໄກໃໝ່ໃນການອະນຸມັດການລົງທຶນ ໂດຍສະເພາະໂຄງການລົງທຶນສໍາປະທານໃຫ້ມີປະສິດທິຜົນດີຂຶ້ນ ແລະ ເພີ່ມຄວາມເປັນເຈົ້າຂອງຂະແໜງທີ່ກ່ຽວຂ້ອງ. ຜ່ານການປັບປຸງຮູບແບບການອະນຸມັດການລົງທຶນນັບແຕ່ເດືອນ ສິງຫາ-ພະຈິກ 2022 (ໄລຍະ 3 ເດືອນ) ເຫັນວ່າສາມາດສໍາເລັດການຄົ້ນຄວ້າເພື່ອຂໍໃບມອບສິດກິດຈະການການລົງທຶນສໍາປະທານ ແລະ ໃນບັນຊີຄວບຄຸມຫລາຍຂຶ້ນ (ທັງໝົດ 51 ໂຄງການ) ສົມທຽບກັບໄລຍະ 8 ເດືອນຕົ້ນປີ (103 ໂຄງການ).

ສໍາລັບທິດທາງ ແລະ ມາດຕະການຊຸກຍູ້ການຈັດຕັ້ງປະຕິບັດວຽກຈຸດສຸມ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດການເງິນ ໃນໄລຍະທ້າຍປີ 2022 ແລະ ປີ 2023 ຄວນສຸມໃສ່ ຄື:

**I ທິດທາງ:**

- ວຽກງານການສົ່ງເສີມການຜະລິດ ເພື່ອທົດແທນການນໍາເຂົ້າ ແລະ ເປັນສິນຄ້າສົ່ງອອກ ເພື່ອສ້າງຖານລາຍຮັບທີ່ເຂັ້ມແຂງ ແລະ ຍືນຍົງ; ສືບຕໍ່ປັບປຸງບັນດາກົນໄກ, ຂອດຂັ້ນການບໍລິການ ແລະ ອະນຸຍາດການລົງທຶນ ແລະ ການດໍາເນີນທຸລະກິດໃຫ້ເປັນຮູບປະທໍາຫຼາຍຂຶ້ນ; ເພີ່ມທະວີການສົ່ງເສີມ ແລະ ສ້າງເງື່ອນໄຂການຜະລິດເປັນກຸ່ມໂດຍສະເພາະ ໂຄງການຜະລິດພືດ ແລະສັດທີ່ໄດ້ເຈລະຈາເປີດຕະຫລາດສົ່ງອອກແລ້ວ ໂດຍຍູ້ແຮງການຜະລິດຈາກປັດໄຈການຜະລິດ, ປຸງແຕ່ງ ໄປເຖິງຂອດຕະຫລາດ. ເລັ່ງປັບປຸງຂອດການປະສານງານ ແລະ ແລກປ່ຽນຂໍ້ມູນລະຫວ່າງພາກລັດ ແລະ ເອກະຊົນ ໃນການຊຸກຍູ້ການຜະລິດພາຍໃນ, ພ້ອມທັງເລັ່ງແກ້ໄຂຂອດຫຍຸ້ງຍາກໃນການຈໍລະຈອນສິນຄ້າພາຍໃນປະເທດ ຊຸກຍູ້ການລົງທຶນເຂົ້າໃສ່ໂຄງລ່າງພື້ນຖານຜະລິດກະສິກໍາ ເຊັ່ນ: ລະບົບສາງ, ໂຮງອົບ ແລະ ອື່ນໆ. ສຸມໃສ່ຕິດຕາມການຄ້າຂາຍຕາມຊາຍແດນ-ການນໍາເຂົ້າສິນຄ້າ ແລະ ປະຕິບັດນະໂຍບາຍອຸດໜູນດ້ານຕ່າງໆໃຫ້ແກ່ຫົວໜ່ວຍການຜະລິດທີ່ໄດ້ກໍານົດໄວ້ໃນລາຍການສົ່ງເສີມການຜະລິດເພື່ອທົດແທນການນໍາເຂົ້າ, ເລັ່ງປັບປຸງການອານວຍຄວາມສະດວກດ້ານການຄ້າ ແລະ ແກ້ໄຂບັນຫາລະບົບ

ອ່ານຕໍ່ສະບັບໜ້າ...

# ລັດຖະມົນຕີກະຊວງຍຸຕິທໍາ ສະເໜີຮ່າງກົດໝາຍວ່າດ້ວຍທະນາຍຄວາມ (ສະບັບປັບປຸງ)

ອ່ານຕໍ່ຈາກສະບັບກ່ອນ...

- ການກໍານົດທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງປະກອບສະພາທະນາຍຄວາມ ຍັງບໍ່ຈະແຈ້ງ ແລະ ຄົບຖ້ວນ ເຮັດໃຫ້ການຄຸ້ມຄອງບໍລິຫານວຽກງານສະພາທະນາຍຄວາມ ແລະ ການຄຸ້ມຄອງທະນາຍຄວາມພົບຄວາມຫຍຸ້ງຍາກ;

- ການກໍານົດບົດບາດຂອງທະນາຍຄວາມ ໃນວຽກງານຊ່ວຍເຫລືອທາງດ້ານກົດໝາຍ ຍັງບໍ່ຈະແຈ້ງ ແລະ ບໍ່ຄົບຖ້ວນ ເຮັດໃຫ້ທະນາຍຄວາມບໍ່ມີຄວາມເຂົ້າໃຈໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວໄດ້;

- ເງື່ອນໄຂການສ້າງຕັ້ງວິສາຫະກິດກົດໝາຍຍັງບໍ່ໄດ້ກໍານົດລະອຽດ ໂດຍສະເພາະຜູ້ສະເໜີສ້າງຕັ້ງ ແລະ ຜູ້ລົງທຶນ, ບໍ່ໄດ້ແຍກວິສະຫະກິດກົດໝາຍພາຍໃນ ແລະ ວິສາຫະກິດກົດໝາຍທີ່ມີການລົງທຶນຂອງຕ່າງປະເທດ ເປັນສາເຫດເຮັດໃຫ້ການອອກໃບອະນຸຍາດດໍາເນີນທຸລະກິດ ແລະ ການຄຸ້ມຄອງວິສາຫະກິດກົດໝາຍພົບຄວາມຫຍຸ້ງຍາກ ແລະ ບໍ່ສາມາດເກັບກໍາຂໍ້ມູນໄດ້.

ພ້ອມນັ້ນ, ທ່ານໄດ້ຍົກໃຫ້ເຫັນເຖິງເຫດຜົນ ແລະ ຄວາມຈໍາເປັນໃນການປັບປຸງກົດໝາຍ ວ່າດ້ວຍທະນາຍຄວາມ ວ່າ: ເພື່ອຮັບປະກັນຄວາມເປັນທໍາ, ຖືກຕ້ອງໃນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງລູກຄວາມ, ຮັບປະກັນສະໜອງຫລັກຖານໃຫ້ແກ່ການແກ້ໄຂຄະດີຢ່າງຖືກຕ້ອງ ແລະ ທັນເວລາ ແລະ ສ້າງຄວາມເຂັ້ມແຂງແກ່ຂະບວນການຍຸຕິທໍາ, ສ້າງເງື່ອນໄຂໃນການເຂົ້າເຖິງຂະບວນການຍຸຕິທໍາ, ສ້າງຄວາມເຊື່ອໝັ້ນແກ່ປະຊາຊົນ ແລະ ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ, ເຮັດໃຫ້ສັງຄົມມີຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຍຸຕິທໍາ ຈຶ່ງມີຄວາມຈໍາເປັນຕ້ອງໄດ້ປັບປຸງກົດໝາຍສະບັບນີ້ ເປັນເຄື່ອງມືທາງດ້ານນິຕິກໍາ ແລະ ກໍານົດຫລັກການ, ລະບຽບການ, ມາດຕະການ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານທະນາຍຄວາມ.

ສໍາລັບການກະກຽມສ້າງຮ່າງກົດໝາຍ ວ່າດ້ວຍທະນາຍຄວາມ (ສະບັບປັບປຸງ) ກະຊວງຍຸຕິທໍາ ໃນນາມເປັນອົງການຮັບຜິດຊອບກົດໝາຍສະບັບດັ່ງກ່າວ ໄດ້ອອກຂໍ້ຕົກລົງ ສະບັບເລກທີ 1395/ກຍ, ລົງວັນທີ 09 ພະຈິກ 2021 ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບປັບປຸງກົດໝາຍ ວ່າດ້ວຍທະນາຍຄວາມ ໂດຍມີຮອງລັດຖະມົນຕີກະຊວງຍຸຕິທໍາ ເປັນຫົວໜ້າ, ປະກອບມີຄະນະ 23 ທ່ານ ທີ່ເປັນຕົວແທນຈາກຫລາຍພາກສ່ວນ ເຊັ່ນ: ກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທໍາ ແລະ ກົມກົດໝາຍຂອງກະຊວງຍຸຕິທໍາ, ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ, ກະຊວງພາຍໃນ, ກະຊວງປ້ອງກັນຄວາມສະຫງົບ, ສານປະຊາຊົນສູງສຸດ, ໄອຍະການປະຊາຊົນສູງສຸດ ແລະ ສະພາທະນາຍຄວາມລາວ ໂດຍມີກົມຄຸ້ມຄອງ ແລະ ສົ່ງເສີມວຽກງານຍຸຕິທໍາ ກະຊວງຍຸຕິທໍາ ແລະ ສະພາທະນາຍຄວາມລາວ ເປັນກອງເລຂາ. ຄະນະທີ່ຖືກແຕ່ງຕັ້ງ ໄດ້ພ້ອມກັນດໍາເນີນການຄົ້ນຄວ້າເນື້ອໃນເບື້ອງຕົ້ນ ແລ້ວຈັດກອງປະຊຸມວິຊາການພາຍໃນ, ປຶກສາຫາລືດ້ວຍຫລາຍຮູບແບບ ແລະ ໄດ້ຈັດກອງປະຊຸມລະດັບວິຊາການ, ຄົ້ນຄ້ວານໍາເອົາບົດຮຽນຂອງປະເທດຫວຽດນາມ ເພື່ອມາວິເຄາະ, ວິໄຈ ແລ້ວນໍາມາພິຈາລະນາປັບປຸງກົດໝາຍສະບັບປັດຈຸບັນ. ພາຍຫລັງທີ່ໄດ້ຮ່າງກົດໝາຍສະບັບປັບປຸງສໍາເລັດກໍໄດ້ນໍາເອົາໄປທາບທາມຄໍາເຫັນ. ຄະນະຮັບຜິດຊອບ ກໍໄດ້ປັບປຸງຕາມການປະກອບຄໍາເຫັນຂອງຜູ້ແທນ, ຈາກນັ້ນ ກໍສະເໜີຫາກົມກົດໝາຍ ເພື່ອກວດກາຄວາມສອດຄ່ອງທາງດ້ານກົດໝາຍ ແລະ ນໍາເຂົ້າຜ່ານກອງປະຊຸມວິສາມັນລັດຖະບານ ໃນວັນທີ 6 ກັນຍາ 2022, ໄດ້ດໍາເນີນກອງປະຊຸມປັບປຸງ ແລະ ຮຽບຮຽງຕາມຄໍາເຫັນ ແລະ ທິດຊີ້ນໍາຂອງກອງປະຊຸມລັດຖະບານ, ຈາກນັ້ນ ໄດ້ນໍາສະເໜີຮ່າງກົດໝາຍດັ່ງກ່າວ ໃຫ້ສະພາແຫ່ງຊາດເພື່ອທາບທາມຄໍາເຫັນສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ໃນ 06 ຈຸດຂອງເຂດຖືກເລືອກຕັ້ງ ເຊິ່ງສະມາຊິກສະພາປະຊາຊົນຂັ້ນແຂວງອ້ອມຂ້າງ ກໍໄດ້ເຂົ້າຮ່ວມປະກອບຄໍາຄິດເຫັນ ທັງໝົດ 132 ເນື້ອໃນ ກວມເອົາ 41ມາດຕາ.

ຫລັງຈາກນັ້ນ ກໍາມາທິການກົດໝາຍ, ກໍາມາທິການທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ, ກະຊວງຍຸຕິທໍາ ກໍຄືຄະນະຮັບຜິດຊອບປັບປຸງກົດໝາຍ ແລະ ພາກສ່ວນທີ່ກ່ຽວຂ້ອງ ໄດ້ຮ່ວມກັນຈັດກອງປະຊຸມກວດກາເນື້ອໃນຮອບດ້ານ ໂດຍໄດ້ນໍາເອົາບັນດາຄໍາເຫັນຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ມາຄົ້ນຄວ້າປັບປຸງ, ໃນນີ້ ໄດ້ປັບປຸງເນື້ອໃນຕາມຄໍາເຫັນສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ທັງໝົດ 26 ເນື້ອໃນ, ກວມເອົາ 18 ມາດຕາ, ໄດ້ເພີ່ມໃໝ່ 1 ມາດຕາ ຄື: ມາດຕາ 74 ສິດ ແລະ ໜ້າທີ່ ຂອງຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ, ພ້ອມນັ້ນ ກໍຍັງໄດ້ປັບປຸງຕາມການຄົ້ນຄວ້າຂອງຄະນະກວດກາເນື້ອໃນຮອບດ້ານ, ເຊິ່ງສາມາດສັງລວມບາງບັນຫາດັ່ງນີ້:

1. ການປົກປ້ອງທະນາຍຄວາມ
2. ມາດຕະຖານ ແລະ ເງື່ອນໄຂຂອງທະນາຍຄວາມ
3. ມາດຕະຖານ ແລະ ເງື່ອນໄຂຂອງທະນາຍຄວາມ ສໍາລັບຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ
4. ການສິ້ນສຸດການເປັນທະນາຍຄວາມ
5. ປະທານ ແລະ ຮອງປະທານ ຄະນະບໍລິຫານງານສະພາທະນາຍຄວາມ
6. ການໂຈະໃບອະນຸຍາດດໍາເນີນທຸລະກິດ
7. ສິດ ແລະ ໜ້າທີ່ຂອງຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ
8. ເສື້ອຄຸມຂອງທະນາຍຄວາມ

ໂຄງປະກອບຂອງຮ່າງກົດໝາຍວ່າດ້ວຍທະນາຍຄວາມ (ສະບັບປັບປຸງ) ກົດໝາຍວ່າດ້ວຍທະນາຍຄວາມ ສະບັບປີ 2016 ທີ່ນໍາໃຊ້ໃນປັດຈຸບັນມີ 11 ພາກ, 14 ໝວດ, 82 ມາດຕາ ແຕ່ສໍາລັບໂຄງປະກອບຂອງຮ່າງກົດໝາຍສະບັບສະເໜີປັບປຸງຄັ້ງນີ້ປະກອບມີທັງໝົດ 10 ພາກ, 15 ໝວດ, 87 ມາດຕາ ໃນນັ້ນ ໄດ້ປັບປຸງຄໍາສັບ 29 ມາດຕາ, ປັບປຸງເນື້ອໃນ 16 ມາດຕາ, ໄດ້ໂຮມສອງພາກເຂົ້າເປັນພາກດຽວກັນ ມີໜຶ່ງພາກ ໄດ້ເພີ່ມເຂົ້າໃໝ່ 01 ໝວດ, 07 ມາດຕາ, ຮັກສາໄວ້ 35 ມາດຕາ.

ສ່ວນເນື້ອໃນສໍາຄັນຂອງຮ່າງກົດໝາຍ ວ່າດ້ວຍທະນາຍຄວາມ (ສະບັບປັບປຸງ) ທີ່ໄດ້ປັບປຸງ ແລະ ເພີ່ມເຂົ້າໃໝ່

- ໄດ້ຮັກສາໄວ້ ເຊິ່ງມີ 35 ມາດຕາ (ມາດຕາ 4, 7, 15, 16, 17, 21, 26, 27, 28, 36, 40, 41, 43, 45, 48, 49, 51, 62, 63, 65, 66, 68, 69, 70, 71, 76, 77, 78, 79, 80, 81, 83, 84 ແລະ 86);

- ໄດ້ປັບປຸງຄໍາສັບ ເຊິ່ງມີ 29 ມາດຕາ (ມາດຕາ 1, 2, 8, 12, 13, 18, 22, 23, 24, 25, 32, 34, 35, 38, 42, 44, 46, 47, 52, 53, 54, 55, 58, 59, 61, 64, 67, 72 ແລະ 87);

- ໄດ້ປັບປຸງເນື້ອໃນ ເຊິ່ງມີ 16 ມາດຕາ (ມາດຕາ 3, 5, 6, 9, 10, 11, 14, 18, 29, 30, 33, 37, 73, 75, 82 ແລະ 85);

- ໄດ້ສ້າງມາດຕາໃໝ່ ເຊິ່ງມີ 7 ມາດຕາ (ມາດຕາ 19, 1, 50, 56, 57, 60 ແລະ 74).

# ບາງຄຳສະເໜີຂອງ ສສຊ ຕໍ່ບັນດາອົງການຈັດຕັ້ງລັດ ແລະ ພາກສ່ວນກ່ຽວຂ້ອງ

ໃນໂອກາດທີ່ບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ຂອງເຂດເລືອກຕັ້ງຕ່າງໆໃນທົ່ວປະເທດ ໄດ້ເຂົ້າຮ່ວມວາລະດຳເນີນກອງປະຊຸມສະໄໝສາມັນເທື່ອ 4 ຂອງສະພາແຫ່ງຊາດຊຸດທີ IX ແລະ ບັນດາທ່ານ ສສຊ ຍັງໄດ້ໃຫ້ສຳພາດຕໍ່ສື່ມວນຊົນຂອງສະພາແຫ່ງຊາດ ໂດຍໄດ້ສະເໜີບາງບັນຫາຕໍ່ອົງການຈັດຕັ້ງລັດ ແລະ ພາກສ່ວນກ່ຽວຂ້ອງຕ່າງໆ ເພື່ອເຮັດໃຫ້ພາລະບົດບາດ, ສິດ ແລະ ໜ້າທີ່ ສສຊ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ບັນດາອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງສັງຄົມ ແລະ ພໍ່ແມ່ປະຊາຊົນ, ພົນລະເມືອງຜູ້ມີສິດເລືອກຕັ້ງ ໄດ້ຮັບຮູ້ຢ່າງເລິກເຊິ່ງ ແລະ ກວ້າງຂວາງ ທັງເປັນການປຸກລະດົມ ໃຫ້ພໍ່ແມ່ປະຊາຊົນບັນດາເຜົ່າ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຕາມແນວທາງນະໂຍບາຍອັນຖືກຕ້ອງຂອງພັກ-ລັດ ຮັບຮູ້ ແລະ ເຂົ້າໃຈແຈ້ງ ຕໍ່ສິດ ແລະ ພັນທະຂອງພົນລະເມືອງ ຕາມລັດຖະທຳມະນູນໄດ້ກຳນົດ ແລະ ໃນຖານະທີ່ເປັນອົງການນິຕິບັນຍັດ ທີ່ເຄື່ອນໄຫວຈັດຕັ້ງປະຕິບັດວຽກງານເປັນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດລວມຂອງປະຊາຊົນບັນດາເຜົ່າ, ຮັບປະກັນໃຫ້ແກ່ການສ້າງ ແລະ ປັບປຸງນິຕິກຳ, ການພິຈາລະນາບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ແລະ ການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳຕ່າງໆຂອງອົງການອຳນາດລັດຂັ້ນທ້ອງຖິ່ນ ດ້ວຍການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍກົດໝາຍເທື່ອລະກ້າວ, ຮັບປະກັນສັງຄົມມີຄວາມສະຫງົບ, ຍຸຕິທຳ, ປະຊາທິປະໄຕ, ສີວິໄລ ແລະ ສອດຄ່ອງກັບແນວທາງຂອງພັກ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂັ້ນທ້ອງຖິ່ນໃຫ້ມີຄວາມເຂັ້ມແຂງ ເຊິ່ງໃນບົດນີ້ ຜູ້ຂຽນໄດ້ສັງລວມຄຳສະເໜີຂອງ ສສຊ ຈາກ 3 ເຂດເລືອກຕັ້ງ ດັ່ງນີ້:




ທ່ານ ສົມຈິດ ທັບລະກອນ ສສຊ ປະຈຳເຂດເລືອກຕັ້ງ 2 ແຂວງຜົ້ງສາລີ ທັງເປັນຮອງປະທານສະພາປະຊາຊົນແຂວງຜົ້ງສາລີ ໄດ້ສະເໜີໃຫ້ອົງການປົກຄອງແຂວງ, ອົງການຈັດຕັ້ງສັງຄົມ ສືບຕໍ່ໃຫ້ການສະໜັບສະໜູນ ແລະ ເປັນເຈົ້າການປະກອບສ່ວນເຂົ້າຮ່ວມ ແລະ ຊຸກຍູ້ໃນການຈັດຕັ້ງປະຕິບັດວຽກງານຂອງສະພາປະຊາຊົນແຂວງໃຫ້ໄດ້ຮັບຜົນສຳເລັດໄປເທື່ອລະກ້າວ ແລະ ໃຫ້ອົງການປົກຄອງແຂວງ, ບັນດາພະແນກການ ເປັນເຈົ້າການໃນການຄົ້ນຄວ້າ, ກຳນົດມາດຕະການ, ວິທີການຈັດຕັ້ງປະຕິບັດ ແລະ ແກ້ໄຂບັນດາຂໍ້ສະເໜີຂອງປະຊາຊົນ ທີ່ສະເໜີຜ່ານສະພາປະຊາຊົນແຂວງ ໃຫ້ທັນກັບໄລຍະເວລາ ແລະ ສອດຄ່ອງຕາມລະບຽບການທີ່ກົດໝາຍກຳນົດໄວ້.

ທ່ານ ຄຳຟອງ ອິນມານີ ສສຊ ປະຈຳເຂດເລືອກຕັ້ງທີ 3 ແຂວງຫລວງນ້ຳທາ ທັງເປັນປະທານສະພາປະຊາຊົນແຂວງຫລວງນ້ຳທາ ໄດ້ສະເໜີເຖິງອົງການຈັດຕັ້ງພັກ-ລັດ ແລະ ພາກສ່ວນກ່ຽວຂ້ອງໃຫ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນຢ່າງເຂັ້ມງວດ ເພື່ອເຮັດໃຫ້ການຈັດປະຕິບັດໜ້າທີ່ການເມືອງຂອງຕົນ ມີປະສິດທິພາບສູງຂຶ້ນ ໄດ້ຮັບຜົນສຳເລັດຕາມລະດັບຄາດໝາຍ.

ທ່ານ ນາງ ຄຳພອນ ພົມມະຈັນ ສສຊ ປະຈຳເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ ທັງເປັນຮອງປະທານສະພາປະຊາຊົນແຂວງອຸດົມໄຊ ໄດ້ສະເໜີເຖິງລັດຖະບານ ໃຫ້ຊ່ວຍຄົ້ນຄວ້າກ່ຽວກັບການເພີ່ມເງິນເດືອນຂັ້ນພື້ນຖານໃຫ້ພະນັກງານ-ລັດຖະກອນໃນທົ່ວປະເທດ ແລະ ສະເໜີລັດຖະບານແບ່ງປັນງົບປະມານໃຫ້ແຂວງອຸດົມໄຊ ເພື່ອນຳເຂົ້າໃນການຟື້ນຟູພື້ນຖານໂຄງລ່າງທີ່ຖືກໄພພິບັດໃນທ້າຍເດືອນສິງຫາ 2022.

## ຕິດຕາມກວດກາການປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດຢູ່ 2 ເມືອງ




(ສພຊ) ໃນລະຫວ່າງວັນທີ 7-9 ທັນວາ 2022 ສະພາປະຊາຊົນແຂວງເຊກອງ ສົມທົບກັບພະແນກການ ແລະ ອົງການທີ່ກ່ຽວຂ້ອງຂອງແຂວງ ໄດ້ເຄື່ອນໄຫວຕິດຕາມກວດກາປະເມີນຄືນຜົນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ໃນຂົງເຂດຍຸຕິທຳ ແລະ ການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດຢູ່ 2 ເມືອງ ຄື: ເມືອງທ່າແຕງ ແລະ ເມືອງລະມາມ ແຂວງເຊກອງ ນຳໂດຍທ່ານ ນາງ ຄຳເສັງ ທຸມມະວົງສາ ຮອງປະທານສະພາປະຊາຊົນແຂວງ ໂດຍການຕ້ອນຮັບຂອງທ່ານ ແສງລາຕີ ຫລອມຍະເດດ ຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງປະຈຳ ເຂດເລືອກຕັ້ງເມືອງທ່າແຕງ ແລະ ທ່ານ ໄຊຍະຫວັດ ກ້ອນຄຳໝັ້ນ ຮອງເລຂາພັກເມືອງ, ຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງລະມາມ, ມີບັນດາຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນແຂວງ, ພະແນກການກ່ຽວຂ້ອງຂັ້ນແຂວງ ແລະ ຄະນະກຳມະການສະກັດກັ້ນ ແລະ ແກ້ໄຂ ບັນຫາຢາເສບຕິດຂັ້ນເມືອງ ແລະ ອຳນາດການປົກຄອງບ້ານເຂົ້າຮ່ວມ.

ໂອກາດດັ່ງກ່າວ, ພັທ. ອ່ອນຕາ ສະສົມບັດ ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບເມືອງທ່າແຕງ ໄດ້ລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໄລຍະ 9 ເດືອນຜ່ານມາ ເຊິ່ງເຫັນໄດ້ວ່າຄະນະພັກ-ຄະນະນຳແຕ່ລະຂັ້ນ ໄດ້ຖືສຳຄັນວຽກງານສຶກສາອົບຮົມ, ໂຄສະນາເຜີຍແຜ່ລະບຽບກົດໝາຍ, ເຊື່ອມຊຶມເອກະສານທີ່ກ່ຽວຂ້ອງກັບວາລະແຫ່ງຊາດວ່າດ້ວຍການແກ້ໄຂ, ສະກັດກັ້ນບັນຫາຢາເສບຕິດ ແລະ ຜົນຮ້າຍຂອງຢາເສບຕິດ, ກົດລະບຽບການສັນຈອນທາງບົກ ໂດຍສຸມໃສ່ໂຄສະນາຢູ່ບັນດາກົມກອງປ້ອງກັນຄວາມສະຫງົບຂອງຕົນ, ປກສ ກຸ່ມບ້ານໃນ 6 ເຂດຈຸດສຸມພັດທະນາທົ່ວເມືອງທ່າແຕງ ເຊິ່ງສາມາດແກ້ໄຂມ້າງຄະດີຄ້າຂາຍຢາເສບຕິດໄດ້ 18 ລາຍ, ຈັບຜູ້ຖືກຫາໄດ້ 22 ຄົນ ຍິງ 4 ຄົນ, ກັກຕົວກຸ່ມມົ້ວສຸມຢາເສບຕິດໄດ້ 27 ຄົນ, ຍຶດຂອງກາງຢາບ້າໄດ້ 21.707 ເມັດ, ມີເຄື່ອງຕິດຕົວປະເພດໂທລະສັບ 20 ໜ່ວຍ, ລົດຈັກ 3 ຄັນ, ເງິນສົດ 9 ແສນກວ່າກີບ, ບັດປະຈຳຕົວ 1 ບັດ, ບັດເອທີເອັມ 1 ບັດ, ໂມງໃສ່ແຂນ 1 ໜ່ວຍ, ໝາກຝ້າລະເບີດທີ່ນ 4 ໜ່ວຍ, ອຸປະກອນຄວບຄຸມການລະເບີດ 2 ອັນ ແລະລູກແກັບ 300 ລູກ, ຄະດີດັ່ງກ່າວແມ່ນໄດ້ສົ່ງໃຫ້ຫ້ອງຕຳຫລວດ ປກສ ແຂວງ ເຊກອງ ເປັນຜູ້ດຳເນີນຕາມລະບຽບກົດໝາຍ.

ຂະນະທີ່ທ່ານ ພັທ. ຮຽມ ໄຊຍະລາດ ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບເມືອງລະມາມ ກໍໄດ້ລາຍງານກ່ຽວກັບສະພາບການຈັດຕັ້ງປະຕິບັດວຽກງານວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດຢູ່ເມືອງຂອງຕົນ ໃນໄລຍະ 9 ເດືອນຜ່ານມາ ເຊິ່ງສາມາດຂຶ້ນບັນຊີເປົ້າໝາຍຄ້າ-ຂາຍຢາເສບຕິດ ໄດ້ທັງໝົດ 135 ຄົນ ຍິງ 10 ຄົນ, ເປົ້າໝາຍເສບຕິດ 894 ຄົນ ຍິງ 45 ຄົນ, ເກັບກຳຈຳນວນຄອບຄົວປອດຢາເສບຕິດໄດ້ທັງໝົດ 15 ບ້ານ, ມີ 2.653 ຄອບຄົວ ໃນນັ້ນ, ຄອບຄົວປອດຢາເສບຕິດມີ 1.393 ຄອບຄົວ, ຄອບຄົວພົວພັນຢາເສບຕິດມີ 1.260 ຄອບຄົວ, ໄດ້ຂຶ້ນບັນຊີກຳນົດບ້ານຈະສ້າງເປັນລ້ານປອດຢາເສບຕິດ ຈຳນວນ 2 ບ້ານຄື: ບ້ານປາກປູນ ແລະ ບ້ານຖ້ຳເຄັ້ງ ແລະ ຍັງໄດ້ມ້າງຄະດີຄ້າ-ຂາຍຢາເສບຕິດ ໄດ້ທັງໝົດ 16 ລາຍ, ກັກຜູ້ຖືກຫາໄດ້ທັງໝົດ 27 ຄົນ ຍິງ 2 ຄົນ, ໃນນັ້ນ ຜູ້ຖືກຫາຄ້າ-ຂາຍຢາເສບຕິດ 17 ຄົນ ຍິງ 2 ຄົນ, ຜູ້ເສບ 7 ຄົນ (3 ຄົນ ແມ່ນບໍ່ມີຂອງກາງຄະດີ), ໄດ້ກວດຍຶດຂອງກາງປະເພດຢາບ້າ ໄດ້ທັງໝົດ 37.001 ເມັດ, ໂທລະສັບ 12 ເຄື່ອງ, ໝໍ້ໄຟ 1 ໜ່ວຍ, ປືນແກັບ 1 ກະບອກ, ລົດຈັກ 4 ຄັນ ແລະ ເງິນກີບ ຈຳນວນ 1 ລ້ານກີບ, ໄດ້ສຶກສາອົບຮົມເປົ້າໝາຍເສບຢາເສບຕິດ ທັງໝົດ 326 ຄົນ, ຍິງ 45 ຄົນ ແລະ ນຳສົ່ງປິ່ນປົວຢູ່ສູນບຳບັດ ຈຳນວນ 4 ຄົນ ແລະ ໄດ້ກວດນ້ຳປັດສະວະຊອກຫາສານເສບຕິດກຸ່ມເປົ້າໝາຍຜູ້ເສບຕິດທີ່ໄດ້ສຶກສາອົບຮົມແລ້ວ ຈຳນວນ 128 ຄົນ ຍິງ 1 ຄົນ ແລະ ພົບເຫັນສານເສບຕິດ ຈຳນວນ 46 ຄົນ.

ພ້ອມນັ້ນ, ຍັງໄດ້ລົງຊຸກຍູ້ ແລະ ຕິດຕາມກວດກາສະພາບຕົວຈິງ ຢູ່ບັນດາເຂດຈຸດສຸມພັດທະນາ ທີ່ເຫັນວ່າພົບບັນຫາລາຍທີ່ສຸດຂອງທັງສອງເມືອງຕື່ມອີກ.

(ນາລີວັນ)

## ພິທີມອບເງິນຊ່ວຍເຫລືອຄອບຄົວ ທີ່ຖືກຜົນກະທົບ ຈາກພະຍາດອະຫິວາໝູອາຟຣິກາ




(ສພຊ) ໃນຕອນເຊົ້າຂອງວັນທີ 13 ທັນວາ 2022 ຢູ່ທີ່ຫ້ອງປະຊຸມຫ້ອງວ່າການເມືອງເງິນ ແຂວງໄຊຍະບູລີ ໄດ້ມີພິທີມອບ-ຮັບເງິນຊ່ວຍເຫລືອແບ່ງເບົາ ແລະ ຢຽວຢາຄອບຄົວທີ່ຖືກຜົນກະທົບຈາກພະຍາດອະຫິວາໝູອາຟຣິກາ ໃຫ້ກັບອົງການປົກຄອງເມືອງເງິນ ຈຳນວນ 43.840.000 ກີບ ໂດຍການມອບຂອງທ່ານ ແສງພາວອນ ຄອມມະນີ ຕາງໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ຮັບໂດຍແມ່ນທ່ານ ທະວີສັກ ໄຊຍະວົງ ວ່າການເລຂາພັກເມືອງ, ວ່າການເຈົ້າເມືອງງເງິນ ໂດຍສອງໜ້າພາກສ່ວນທີ່ກ່ຽວເຂົ້າຮ່ວມເປັນສັກຂີພິຍານ.

ຈາກນັ້ນ, ທ່ານ ທະວີສັກ ໄຊຍະວົງ ພ້ອມດ້ວຍຫ້ອງການທີ່ກ່ຽວຂ້ອງ ໄດ້ນຳເອົາເງິນຈຳນວນ 43.840.000 ກີບ ໄປມອບໃຫ້ກັບຄອບຄົວທີ່ຖືກຜົນກະທົບພະຍາດອະຫິວາໝູອາຟຣິກາ ບ້ານໂຮມໄຊ ເມືອງເງິນ ທີ່ເກີດຂຶ້ນໃນທ້າຍປີ 2019 ຈຳນວນ 83 ຄອບຄົວ, ມີໝູ 196 ໂຕ, ນ້ຳໜັກ 7.459 ກິໂລ ໂດຍການກ່າວຮັບຂອງຜູ້ຕາງໜ້າຄອບຄົວທີ່ໄດຮັບຜົນກະທົບ ແລະ ຊ້ອງໜ້າມີການຈັດຕັ້ງບ້ານ, ຄອບຄົວທີ່ໄດ້ຮັບຜົນກະທົບ ຕະຫລອດຮອດເຖົ້າແກ່ແນວໂຮມບ້ານເຂົ້າຮ່ວມເປັນສັກຂີພິຍານ.

(ສຸລິຍາ ແສງເດືອນ)




# ເງິນຊົດເຊີຍຈາກໂຄງການກໍ່ສ້າງທາງລົດໄຟລາວ-ຈີນ ຍັງຄ້າງເກືອບ 55 ຕື້ກີບ

ເນື່ອງໃນໂອກາດເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອ 4 ຂອງສະພາແຫ່ງຊາດ ຊຸດ



ທີ IX ທ່ານ ນາງ ຄຳພອນ ພົມມະຈັນ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ ທັງເປັນຮອງປະທານສະພາປະຊາຊົນແຂວງອຸດົມໄຊ ໄດ້ຕາງໜ້າໃຫ້ ຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 4 ໃຫ້ສຳພາດຕໍ່ສື່ມວນຊົນ ກ່ຽວກັບຜົນງານທີ່ພົ້ນເດັ່ນໃນໄລຍະຜ່ານມາ ເຊິ່ງທ່ານໃຫ້ຮູ້ວ່າ: ນັບແຕ່ກອງປະຊຸມສະໄໝສາມັນເທື່ອທີ 3 ມາເຖິງປັດຈຸບັນ ເຫັນວ່າຄະນະ ສສຊ ໄດ້ຕັ້ງໜ້າປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນກົດໝາຍ ໃນຖານະທີ່ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງພໍ່ແມ່ປະຊາຊົນບັນດາເຜົ່າ ເຊິ່ງສະແດງອອກໃຫ້ເຫັນໄດ້ຫຼາຍດ້ານຄື:

ດ້ານນິຕິບັນຍັດ: ເປັນເຈົ້າການປະສານສົມທົບກັບສະພາປະຊາຊົນແຂວງ ໃນການຈັດກອງປະຊຸມປະເມີນຜົນການປະຕິບັດກົດໝາຍ 2 ຄັ້ງ, ລວມມີ 8 ສະບັບ. ນອກນີ້, ຍັງໄດ້ຈັດກອງປະຊຸມທາບທາມບັນດາຮ່າງກົດໝາຍ ເພື່ອແລກປ່ຽນຄຳຄິດຄຳເຫັນຈາກຂະແໜງການທີ່ກ່ຽວຂ້ອງທີ່ສະພາແຫ່ງຊາດສົ່ງໃຫ້ກ່ອນຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 3-4 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ທັງໝົດ 24 ສະບັບ; ຕິດພັນກັບບັນຫາຂ້າງເທິງ ສສຊ ປະຈຳເຂດເລືອກຕັ້ງ ຍັງເອົາໃຈໃສ່ເຂົ້າໃນການຄົ້ນຄວ້າພິຈາລະນາ ແລະ ຮັບຮອງເອົາການສ້າງ ແລະ ປັບປຸງນິຕິກຳຂັ້ນແຂວງ ຈຳນວນ 6 ສະບັບ ໃນນີ້; ສ້າງໃໝ່ 4 ສະບັບ ແລະ ປັບປຸງ 2 ສະບັບ.

ດ້ານຕົກລົງບັນຫາສຳຄັນ: ໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນໄດ້ຫຼາຍບັນຫາ ເຊັ່ນ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ພິຈາລະນາຮັບຮອງເອົາການສະເໜີແຕ່ງຕັ້ງບຸກຄະລາກອນຂອງລັດຖະບານຈຳນວນໜຶ່ງ. ນອກນີ້, ຍັງໄດ້ຈັດກອງປະຊຸມຮຽກໂຮມເອົາບັນດາພະແນກການທີ່ກ່ຽວຂ້ອງ ເຂົ້າມາລາຍງານສະພາບພົ້ນເດັ່ນ ແລະ ຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດວຽກງານຂອງຕົນໃນ 3 ຂົງເຂດ ໄລຍະ 6 ເດືອນ ແລະ ປະຈຳ 1 ປີ ເພື່ອເປັນຂໍ້ມູນໃຫ້ ສສຊ ກ່ອນເຂົ້າຮ່ວມກອງປະຊຸມສະໄໝສາມັນທຸກໆເທື່ອຂອງສະພາແຫ່ງຊາດ ຊຸດທີ IX.

ດ້ານຕິດຕາມກວດກາ: ໂດຍປະຕິບັດຕາມກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ຄະນະ ສສຊ ປະຈຳເຂດເລືອກຕັ້ງ ໄດ້ສົມທົບກັບສະພາປະຊາຊົນແຂວງ ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2022 ແລະ ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ໃນ 3 ເມືອງ: ເມືອງງາ, ເມືອງນາໝໍ້ ແລະ ເມືອງແບງ; ຕິດຕາມກວດກາຊຸກຍູ້ຜົນກະທົບຂອງໂຄງການກໍ່ສ້າງເສັ້ນທາງລົດໄຟລາວ-ຈີນ ຊ່ວງຜ່ານແຂວງອຸດົມໄຊ, ເມືອງໄຊ, ເມືອງງາ, ເມືອງນາໝໍ້ ເປັນຕົ້ນແມ່ນການຊົດເຊີຍໃຫ້ແກ່ປະຊາຊົນທີ່ຖືກຜົນກະທົບ ໃນປັດຈຸບັນເຫັນວ່າໄດ້ຊົດເຊີຍຜົນກະທົບໃຫ້ແກ່ປະຊາຊົນໄປແລ້ວໃນ 3 ເມືອງ ລວມມູນຄ່າ 198,6 ຕື້ກວ່າກີບ ໃນມູນຄ່າທັງໝົດ 253 ຕື້ກວ່າກີບ ປັດຈຸບັນຍັງຄ້າງ 54,4 ຕື້ກວ່າກີບ; ຕິດຕາມກວດກາໂຄງການຂຸດຄົ້ນແຮ່ຄຳ ເມືອງປາກແບງ



ພາບປະກອບ

ເປັນຕົ້ນແມ່ນການປ່ອຍນ້ຳເສຍລົງສູ່ແຫຼ່ງນ້ຳທຳມະຊາດ ເຮັດໃຫ້ສັດຂອງປະຊາຊົນທີ່ໄປດື່ມນ້ຳແລ້ວຕາຍ ຕາມຄຳຮ້ອງຂອງປະຊາຊົນ; ເຄື່ອນໄຫວຊຸກຍູ້, ຕິດຕາມກວດກາ ການຈັດຕັ້ງປະຕິບັດບັນດາຄາດໝາຍ ຂົງເຂດການສຶກສາທິການ ແລະ ກິລາ ເປັນຕົ້ນແມ່ນການປັບຄຸນນະພາບການຮຽນ-ການສອນໃນທຸກຊັ້ນສາຍໃນໄລຍະໃໝ່ ແລະ ການຈັດຕັ້ງປະຕິບັດວຽກງານກາຍະກຳ.

ທ່ານ ນາງ ຄຳພອນ ພົມມະຈັນ ໃຫ້ຮູ້ຕື່ມວ່າ: ຜ່ານການເຄື່ອນໄຫວພົບປະພໍ່ແມ່ປະຊາຊົນ ນຳເອົາຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 2-3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ໄປເຜີຍແຜ່ແມ່ນໄດ້ຮັບຜົນສຳເລັດ ຕາມລະດັບຄາດໝາຍທີ່ວາງໄວ້ ທັງໝົດ 177 ຈຸດ, ມີຜູ້ເຂົ້າຮ່ວມຮັບຟັງ 15.947 ຄົນ ຍິງ 5.811 ຄົນ; ຕິດພັນກັບການລົງເຜີຍແຜ່ຍັງເປັນການຕິດຕາມກວດກາຮັບຟັງຄຳຄິດຄຳສະເໜີຂອງປະຊາຊົນໄດ້ທັງໝົດ 848 ຄຳສະເໜີ ຂົງເຂດເສດຖະກິດ ມີ 327 ຂໍ້, ຂົງເຂດວັດທະນະທຳ-ສັງຄົມ ມີ 143 ຂໍ້ ແລະ ຂົງເຂດຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີ 19 ຂໍ້, ພົວພັນເຖິງຂັ້ນສູນກາງ ມີ 20 ຂໍ້, ຂັ້ນແຂວງ 113 ຂໍ້ ແລະ ຂັ້ນເມືອງ 715 ຂໍ້ ເຊິ່ງຄຳສະເໜີຂອງປະຊາຊົນສ່ວນຫຼາຍແມ່ນຕິດພັນກັບການກໍ່ສ້າງພື້ນຖານໂຄງລ່າງ ແລະ ການພັດທະນາອາຊີບ ເຊັ່ນ ການສ້ອມແປງ ແລະ ການຍົກລະດັບເສັ້ນທາງ, ຊົນລະປະທານ, ນ້ຳລິນສະອາດ, ການສົ່ງເສີມການປູກ-ການລ້ຽງ, ການແກ້ໄຂ ແລະ ຄ່າຊົດເຊີຍຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການກໍ່ສ້າງເສັ້ນທາງລົດໄຟ ລາວ-ຈີນ, ການແກ້ໄຂຄວາມທຸກຍາກໃຫ້ແກ່ປະຊາຊົນຂອງໂຄງການຂຸດຄົ້ນແຮ່ທາດ.

# ສູນພັດທະນາສີມືແຮງງານອຸດົມໄຊ ມີ 7 ສາຂາ



(ສພຊ) ທ່ານ ສົມພອນ ນາວຣີວ່າງ ອຳນວຍການສູນພັດທະນາສີມືແຮງງານແຂວງອຸດົມໄຊ ໄດ້ລາຍງານໃຫ້ຊາບກ່ຽວກັບສະພາບການຈັດຕັ້ງປະຕິບັດຂອງສູນການເຝິກ ແລະ ພັດທະນາສີມືແຮງງານແຂວງອຸດົມໄຊ ຕໍ່ທ່ານ ດຣ. ນາງ ສິດທິວອນ ທົງສາຄອນ ຮອງປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສະພາປະຊາຊົນແຂວງອຸດົມໄຊ ພ້ອມດ້ວຍທີມງານ ໃນໂອກາດທີ່ໄດ້ເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຢູ່ສູນດັ່ງກ່າວ ໃນອາທິດຜ່ານມາ ເຊິ່ງໄດ້ຮັບການຕ້ອນຮັບໂດຍທ່ານ ສົມພອນ ນາວຣີວ່າງ ແລະ ມີຄູອາຈານພາຍໃນສູນເຂົ້າຮ່ວມ.

ທ່ານ ສົມພອນ ນາວຣີວ່າງ ໃຫ້ຮູ້ວ່າ: ສູນການເຝິກ ແລະ ພັດທະນາສີມືແຮງງານແຂວງອຸດົມໄຊ ໄດ້ຮອງຮັບຜູ້ເຂົ້າເຝິກຈາກບັນດາແຂວງພາກເໜືອ, ມີ 7 ສາຂາວິຊາຮຽນຄື: ຊ່າງຕັດຫຍິບເຄື່ອງນຸ່ງ, ຊ່າງປຸງແຕ່ງອາຫານ ແລະ ການໂຮງແຮມ, ຊ່າງກໍ່ສ້າງ-ເຄຫາສະຖານ, ຊ່າງໄຟຟ້າເຕັກນິກ, ຊ່າງນຳໃຊ້ ແລະ ຊ່ອມແປງຄອມພິວເຕີ, ຊ່າງນຳໃຊ້ ແລະ ສ້ອມແປງລົດຈັກ ແລະ ສາຂາປູກຝັງ-ລ້ຽງສັດ. ໃນແຕ່ລະປີມີ 2 ຊຸດຮຽນ, ຊຸດ 1 ຮອງຮັບນັກຮຽນໄດ້ 300 ກວ່າຄົນ, ໃນແຕ່ລະປີສາຂາວິຊາທີ່ມີຜູ້ເຂົ້າເຝິກຫຼາຍກວ່າໝູ່ແມ່ນຕັດຫຍິບເຄື່ອງນຸ່ງ, ປຸງແຕ່ງອາຫານ ແລະ ການໂຮງແຮມ, ສ້ອມແປງລົດຈັກ ແລະ ໄຟຟ້າ, ສ່ວນສາຂາທີ່ມີຜູ້ເຂົ້າເຝິກໜ້ອຍແມ່ນສາຂາ ປູກຝັງ-ລ້ຽງສັດ ແລະ ກໍ່ສ້າງ-ເຄຫາສະຖານ. ພ້ອມກັນນັ້ນ, ຍັງໄດ້ການລາຍງານຕາມຄຳຖາມເຈາະຈີ້ມຂອງປະທານກອງປະຊຸມ, ຄະນະກຳມະການ ແລະ ວຽກງານອື່ນໆ.



ໂອກາດດຽວກັນນີ້, ບັນດາຄູອາຈານ ແລະ ບັນດາທ່ານທີ່ເຂົ້າຮ່ວມໄດ້ມີຄຳຄິດຄຳເຫັນແລກປ່ຽນກັນຢ່າງກົງໄປກົງມາ ແລະ ມີຄຳສະເໜີເຖິງສະພາປະຊາຊົນແຂວງ, ການແລກປ່ຽນຄຳຄິດເຫັນດັ່ງກ່າວ ກໍເພື່ອຊອກເຫັນດ້ານດີ-ດ້ານອ່ອນ, ຂໍ້ຄົງຄ້າງ ແລະ ວິທີທາງແກ້ໄຂ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າມີປະສິດທິພາບ, ປະສິດທິຜົນ ແລະ ດີຂຶ້ນກວ່າເກົ່າ.

ທັງນີ້, ກໍເພື່ອຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດວຽກງານພາຍໃນສູນພັດທະນາສີມືແຮງງານແຂວງອຸດົມໄຊ ເພື່ອປະຕິບັດຕາມແຜນການເຄື່ອນໄຫວຂອງຄະນະກຳມະການ ແລະ ເພື່ອເປັນການເກັບກຳຂໍ້ມູນໃຫ້ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ໃນການກະກຽມບັນດາເນື້ອໃນ ແລະ ດຳເນີນກອງປະຊຸມຄົບຄະນະ ປະຈຳປີ 2022 ທີ່ຈະໄຂຂຶ້ນໃນທ້າຍເດືອນມັງກອນ 2023 ທີ່ຈະມາເຖິງນີ້. ພ້ອມດຽວກັນນັ້ນ, ທາງຄະນະທີມງານຍັງໄດ້ຢ້ຽມຢາມຫ້ອງການເຝິກຕົວຈິງຕື່ມອີກ.

(ແສງພອນ ອິນນະລົງ)

# ເຝິກອົບຮົມເຄື່ອງມືລົງຄະແນນສຽງ ແບບທັນສະໄໝໃຫ້ ສພຂ ສາລະວັນ



(ສພຊ) ເພື່ອເປັນການກະກຽມຮອງຮັບໃຫ້ແກ່ວຽກງານການລົງຄະແນນສຽງ ຮູບແບບໃໝ່ ທີ່ທັນສະໄໝຂອງສະມາຊິກສະພາປະສະພາປະຊາຊົນແຂວງ ໃນການເຂົ້າໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ (ສພຂ) ສາລະວັນ.

ໃນວັນທີ 14 ທັນວາ 2022 ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງຫຼວງນ້ຳທາ ໄດ້ສະໜັບສະໜູນເຄື່ອງມືລົງຄະແນນສຽງທັນສະໄໝ ໂດຍຜ່ານເວັບໄຊ໌ ແລະ ຈັດເຝິກອົບຮົມ (ເຝິກອົບຮົມຜ່ານວິດີໂອທາງໄກ) ໃຫ້ພະນັກງານຂອງ ສພຂ ສາລະວັນ ເພື່ອຄຸ້ມຄອງ ແລະ ນຳໃຊ້ ໂດຍການເຂົ້າຮ່ວມເປັນຄະນະປະທານຂອງທ່ານ ພູນແກ້ວ ເຫລົາອິນ ກຳມະການພັກແຂວງ, ຫົວໜ້າພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງຫຼວງນ້ຳທາ ແລະ ທ່ານ ສົມພອນ ແສງສຸລິຈັນ ເລຂາທິການ ສພຂ ສາລະວັນ ພ້ອມດ້ວຍພະນັກງານ-ວິຊາການຂອງທັງສອງຝ່າຍເຂົ້າຮ່ວມ.

ພິທີເຝິກອົບຮົມໃນຄັ້ງນີ້, ວິທະຍາກອນໄດ້ນຳສະເໜີພາກທິດສະດີໃຫ້ຮັບຮູ້ກ່ຽວກັບໂຄງສ້າງຂອງລະບົບລົງຄະແນນສຽງເບື້ອງຕົ້ນ, ການລັອກອິນເຂົ້າລະບົບ, ການຕັ້ງຄ່າເມນູຕ່າງໆ, ການຈັດການຂໍ້ມູນຄະແນນສຽງ, ການລາຍງານຜົນການລົງຄະແນນສຽງ. ຫຼັງຈາກນັ້ນ, ສຳມະນາກອນ ກໍໄດ້ເຝິກລົງມືພາກປະຕິບັດຕົວຈິງທົດລອງການລົງຄະແນນສຽງ.

ໃນຕອນທ້າຍ, ທັງສອງຝ່າຍກໍໄດ້ມີພິທີມອບ-ຮັບ ແລະ ຜ່ານບົດບັນທຶກ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໃນວຽກງານທັງສອງຝ່າຍໃນຕໍ່ໜ້າອີກດ້ວຍ.

ພາຍຫຼັງສຳເລັດການເຝິກໃນຄັ້ງນີ້ ພະນັກງານໄອທີ ສພຂ ສາລະວັນ ຈະໄດ້ຂຶ້ນແຜນຈັດເຝິກອົບຮົມໃຫ້ແກ່ບັນດາທ່ານສະມາຊິກສະພາປະຊາຊົນແຂວງ ໄດ້ຮຽນຮູ້ ແລະ ທຳຄວາມເຂົ້າໃຈ ເພື່ອນຳໃຊ້ເຂົ້າໃນວຽກງານການລົງຄະແນນສຽງ ໄດ້ຢ່າງມີປະສິດຕິຜົນ.

(ດີລຳພົນ ພົມມະຈັນ)

ສາລະພັດບັນຫາ



# ຫລ່ຽມໝາກເຟືອງ

ໂດຍ: ຕົ້ນກົບເມກ

ຖ້າວ່າສັງຄົມເຮົາມັກ ຫລື ຫລົງສິ່ງເສີມວ່າ ຄົນລວຍ ຫລື ຄົນມີຖານະສູງດີທຸກຄົນນີ້ ໜ້າຄິດ ເພາະຄວາມລວຍ ຫລື ຄວາມຈົນ ບໍ່ແມ່ນເຄື່ອງວັດຄ່າປະກັນໃຫ້ເປັນຄົນດີ ຫລື ຊົ່ວໄດ້! ທຸກມື້ນີ້ຄົນຫລາຍຫລ່ຽມ-ຄົນເກັ່ງສ້າງພາບມັກຈະຖືກຍົກຍ້ອງເຊີດຊູວ່າດີເກັ່ງ ເພາະເຂົ້າໃຈຕື້ນວ່າ: ເຂົາເກັ່ງຈຶ່ງສຳເລັດໄດ້ ແຕ່ບໍ່ເຄີຍຄິດ ຫລື ສອນກັນໃຫ້ເບິ່ງເບື້ອງຫລັງ ແລະ ຊີວິດຈິງ!

ຖ້າວ່າສັງຄົມນິຍົມ ຍ້ອງກັນພຽງແຕ່ເຫັນດ້ານໜ້າຂອງຫລຽນ ແຕ່ບໍ່ຄ່ອຍສອນກັນໃຫ້ເບິ່ງດ້ານຫລັງຂອງຫລຽນນີ້ກໍໜ້າຄິດ ເພາະຊີວິດຄົນມີຫລາຍມູມ-ຫລາຍດ້ານ ປຽບຄືຫລຽນມີສອງດ້ານ ທັງໜ້າ ແລະ ຫລັງ ດັ່ງນັ້ນ, ຜູ້ມີປັນຍາຮອບຄອບ ຈຶ່ງຕ້ອງເບິ່ງໃຫ້ຄົບສອງດ້ານ. ເຖິງຢ່າງໃດກໍຕາມ ທ່າອ່ຽງຄົນໃນສັງຄົມ ກໍຍັງເຫັນມັກພວກມີພາບພົດ ປະສົບຜົນສຳເລັດດ້ວຍນ້ຳລາຍ ດ້ວຍການລູບແຄ່ງເລຍຂາ, ດ້ວຍການສ້າງພາບຜົດໂກ້ຫລູ. ດັ່ງນັ້ນ, ເວລາເລືອກ ຫລື ຕັດສິນ ຄົນເຮົາຈຶ່ງໄປຕິດກັບຖານະສັງຄົມ ແຕ່ເບິ່ງຂ້າມຄວາມປະພຶດ ແລະ ຄຸນນະທຳຕົວຈິງ ອີກທ່າອ່ຽງໜຶ່ງທີ່ເຫັນໄດ້ກໍຄື ຂໍວ່າແຕ່ຖານະດີ-ລວຍສຳເລັດໄດ້ຍ້ອນຫຍັງແນ່?

ບາງຄົນຖະນັດສ້າງພາບ-ລີລາຮ້າຍກວ່າຫລ່ຽມໝາກເຟືອງ ຫລື ບໍ່ດັ່ງນັ້ນ ກໍປະພຶດຕົວກົ້ງໄປໄດ້ທຸກສະພາບການ ແນວພາກັນຖືວ່າ ສຸກງ່າໃດກິນງ່ານັ້ນ ເຮົາຈະສົ່ງເສີມ ແລະ ສ້າງສັນຄ່ານິຍົມກັນແບບໃດ? ສ້າງຄົນດີ-ຄົນເກັ່ງຢ່າງດຽວ? ຖ້າເປັນແນວນັ້ນ ເຮົາກໍປະຖິ້ມຄຸນສົມບັດສຶກສາ ຫລື ບາງຄົນຕອບວ່າ: ບໍ່ແມ່ນປະຖິ້ມແຕ່ເບິ່ງຂ້າມບໍ່ມີໃຜສົນໃຈເວົ້າເຖິງ ຫລື ມີພຽງແຕ່ເວົ້າພໍໃຫ້ມັນຄົບໄວ້ກໍພໍ...

ຜູ້ຂຽນເຫັນວ່າ: ການສ້າງສັນສົ່ງເສີມຄ່ານິຍົມດີງາມຖືກຕ້ອງຂອງຄົນໃນສັງຄົມ ເຮົາຈະເລືອກແບບໃດແທ້? ຖ້າວ່າບໍ່ແກ້ໃຫ້ຖືກຕ້ອງ ຫລື ພຽງແຕ່ເວົ້າໄວ້ໃຫ້ສວຍງາມ ແຕ່ພາກປະຕິບັດບໍ່ເຄີຍເກີດຂຶ້ນ ເຊິ່ງກໍເຂົ້າທຳນອງ ໄປຫລົງຍ້ອງຄົນຫລ່ຽມໝາກເຟືອງແທນ ແບບນີ້ກໍຍາກ ໜ້າຄິດ!





ສຸກສະບາຍຫາຍໂຣຄາ

# ອາການເສບຕິດກາເຟ ແລະ ວິທີການແກ້ເບື້ອງຕົ້ນ

ແປ ແລະ ຮຽບຮຽງໂດຍ: ສາວແວ່ນ

ຫາກທ່ານຮູ້ໂຕວ່າເປັນຄົນມັກກິນກາເຟ ແລະ ຕ້ອງກິນທຸກມື້ ເພື່ອໃຫ້ຮ່າງກາຍຕື່ນໂຕພ້ອມທີ່ຈະເຮັດວຽກ ອາດຈະດື່ມ 1-2 ຈອກຕໍ່ມື້ ລະວັງທ່ານຈະຕິດກາເຟແບບບໍ່ຮູ້ໂຕ ກວ່າຊິຮູ້ກໍຕໍ່ເມື່ອມື້ໃດບໍ່ໄດ້ດື່ມກາເຟແລ້ວຮູ້ສຶກເຈັບຫົວ, ບໍ່ສົດຊື່ນ, ຈິດໃຈບໍ່ເປັນສຸກ ນັ້ນເປັນອາການ "ຖອນຄາເຟອີນ" (Caffeine withdrawal) ອັນເນື່ອງມາຈາກການດື່ມກາເຟຫລາຍເກີນໄປ ເພາະວ່າຄາເຟອີນເປັນສານເຄມີຫລັກໃນກາເຟ ທີ່ຊ່ວຍກະຕຸ້ນລະບົບປະສາດເຮັດໃຫ້ສະໝອງແຈ່ມໃສ, ກະຕືລືລົ້ນ, ວ່ອງໄວ, ບໍ່ເຫງົານອນ ແລະ ຍັງມີຄວາມເປັນຢາເສບຕິດຢູ່ເລັກນ້ອຍ.

ອາການຖອນກາເຟອີນ ປະກອບດ້ວຍອາການເຈັບຫົວ ເຊິ່ງພົບຫລາຍທີ່ສຸດ ແລະ ມີຄວາມຮຸນແຮງແຕກຕ່າງກັນໃນແຕ່ລະຄົນ ມັກມີອາການອ່ອນເພຍ, ບໍ່ມີແຮງ, ຫງ່ວມເຫງົາ, ມຶນງົງ, ມັກຫາວນອນ ແລະ ສະໝອງບໍ່ປອດໂປ່ງ ຮູ້ສຶກປວດເມື່ອຍຕົນໂຕ, ມີອາການຊຶມເສົ້າ, ບໍ່ມີສະມາທິ, ໃຈຮ້າຍ, ໂມໂຫງ່າຍ ແລະ ວິນຫົວປວດຮາກ.

ຄວາມຮຸນແຮງຂອງການເສບຕິດຄາເຟອີນ ຂຶ້ນກັບປະລິມານການດື່ມໃນແຕ່ລະມື້ ຍິ່ງດື່ມຫລາຍອາການກໍຍິ່ງຮຸນແຮງຂຶ້ນ ຫາກບໍ່ໄດ້ດື່ມແລ້ວ ອາການດັ່ງກ່າວ ກໍສາມາດເກີດຂຶ້ນໄດ້ ເຖິງວ່າເຈົ້າຈະກິນມື້ລະຈອກກໍຕາມ ອາການເສບຕິດຄາເຟອີນຈະສົ່ງຜົນເສຍຕໍ່ສຸຂະພາບກາຍ ແລະ ຈິດໃຈ ທັງອາດກໍ່ໃຫ້ເກີດບັນຫາສຸຂະພາບໄລຍະຍາວໄດ້ເຊັ່ນດຽວກັນ ເປັນຕົ້ນແມ່ນຄວາມດັນເລືອດສູງ, ກະດູກຜ່ອຍ ແລະ ໂລກຕັບ.

**ວິທີແກ້ການເສບຕິດກາເຟເບື້ອງຕົ້ນ:**

**1. ຢ່າຢຸດກາເຟໃນທັນທີ**

ໃຫ້ຄ່ອຍຫລຸດປະລິມານການດື່ມກາເຟລົງມື້ລະເລັກລະໜ້ອຍ ແຕ່ຢ່າຢຸດ ຫລື ຫລຸດລົງຢ່າງກະທັນຫັນ ເພາະຈະພາໃຫ້ເກີດອາການຖອນກາເຟອີນ

**2. ຢຸດການດື່ມກາເຟອີນຈາກແຫລ່ງອື່ນ**

ຢ່າລືມວ່າກາເຟອີນມີຢູ່ໃນອາຫານ ແລະ ເຄື່ອງດື່ມຕ່າງໆ ເຊັ່ນ: ແປັບຊີ, ເຄື່ອງດື່ມຊູກຳລັງ...ຖ້າຫາກຢາກຫລຸດການດື່ມກາເຟແລ້ວ ຕ້ອງຫລຸດການດື່ມເຄື່ອງດື່ມ ແລະ ອາຫານທີ່ມີຄາເຟອີນນຳເຊັ່ນດຽວກັນ.

**3. ດື່ມກາເຟທີ່ບໍ່ມີສານກາເຟອີນ**

ອີກໜຶ່ງທາງເລືອກກໍຄື ການຊອກຫາກາເຟທີ່ບໍ່ມີສານກາເຟອີນມາດື່ມແທນ ເພາະກາເຟປະເພດນີ້ ກໍມີການແຕ່ງກິ່ນລົດຊາດໃກ້ຄຽງກັບກາເຟອີນ ແຕ່ຈະມີກາເຟອີນໜ້ອຍກວ່າກາເຟປົກກະຕິເຖິງ 97% ນຳມາດື່ມສະຫລັບກັບກາເຟປົກກະຕິ ກໍຈະຊ່ວຍໃຫ້ເຊົາກາເຟໄດ້ໄວຂຶ້ນ.

**4. ຫາເຄື່ອງດື່ມອື່ນມາທົດແທນ**

ລອງປ່ຽນມາດື່ມຊາສະມຸນໄພ ຫລື ຊາທີ່ບໍ່ມີກາເຟອີນ ເພື່ອສຸຂະພາບຈະເປັນການດີທີ່ສຸດ

**5. ດື່ມນ້ຳຂັບສານພິດ**

ການດື່ມນ້ຳເຂົ້າໄປໃນຮ່າງກາຍຫລາຍໆ ໃນໄລຍະທີ່ກຳລັງຮັກສາອາການ ຖອນຄາເຟອີນ ຈະຊ່ວຍຂັບສານຄາເຟອີນອອກຈາກຮ່າງກາຍໄດ້ຫລາຍຍິ່ງຂຶ້ນ ຊ່ວຍຫລຸດອາການຂ້າງຄຽງຕ່າງໆ ເຊັ່ນ: ອາການເຈັບຫົວ, ບໍ່ມີສະມາທິ...ທັງຊ່ວຍໃຫ້ຮ່າງກາຍ ແລະ ສະໝອງປອດໂປ່ງ ບໍ່ອ່ອນເພຍ.

www.thairath.co.th



ສາລາກະວີ

# ທະຫານຊາຍແດນ

\# ໂດຍ: ຫງວຽນ ກວາງ ທຽວ

ບົດກະວີຈາກນັກຂຽນ ສສ. ຫວຽດນາມ ເພື່ອສະເຫລີມສະຫລອງວັນສ້າງຕັ້ງສາຍພົວພັນທາງການທູດ ລາວ-ຫວຽດນາມ ຄົບຮອບ 60 ປີ ແລະ ວັນເຊັນສົນທິສັນຍາມິດຕະພາບ ລາວ-ຫວຽດນາມ ຄົບຮອບ 45 ປີ

❈ ເລາະລຽບແດນດ່ານດ້າວ
"ລ້ານຊ້າງ" ຄົນເຂົາຂານ
"ກອງທັບຫລວງ" ຄາວນັ້ນ
ກັບດິນດອນບ່ອນເບື້ອງ

ທານີຊື່ເມືອງລາວ
ຊ່າກັນໄກກ້ອງ
ເຄີຍພົວພັນຜູກ
ຄົນເອີ້ນວ່າ "ລາວ"

❈ ຄາວນັ້ນກອງທັບໄດ້
ທົ່ວເຂດແດນສາຫາ
ປົກປ້ອງທໍລະນີພື້ນ
ອາໄສແມ່ນ້ຳລ້ຽງ

ອາໄສປ່າເຂົາໝາ
ດຸ່ງເດີນເນົາຊົ້ນ
ເຄີຍຝັງສາຍແຮ່
ຊີວາໃຫ້ຜ່ານໄພ

❈ ໄດ້ມາເຢືອນອີກຄັ້ງ
ພູເຂົາຂຽວເຄີຍນອນ
ຕອນນີ້ຍັງສະຫງົບນິ້ງ
ພາໃຫ້ຫວນພົບພໍ້

ແດນດ່ານເຄີຍເນົາ
ກ່ອນສິງຄາມຄາວກີ້
ຫລິງເຫັນຂຽວອຸມທຸ່ມ ຢູ່ນໍ!
ເຫດການກໍ້ເກົ່າຫລັງ

❈ ສຽງດາບດັງສະນັ່ນກ້ອງ
ເຂດຮ່ອມພູເຂົາຂຽວ
ຕອນນັ້ນກອງທັບຫລວງຄົນກ້າ
ຫລົບຊ້ອນຕົວຕາມປ່າໄມ້

ກັງວານຢູ່ໃນຫູ
ເຫລົ່າທະຫານເຄີຍຫລົບຊ້ອນ
ທ່ອງສາຫາໄປທົ່ວ
ອຳພາງໄວ້ເຊື່ອງຕົນ

❈ ຕອນນີ້ຜືນຕອບຕ້ອນ
ລາວ-ຫວຽດນາມສະຫງົບສຸກ
ຍຸທ່າງສຸກເສີມສ້າງ
ພັດທະນາຮຸ່ງກ້າວ

ໄຊຊະນະສວຍງາມ
ໄພ່ປະຊາມີຮອຍຍິ້ມ
ເຢືອນຢາມເປັນໄລຍະ
ຈະເລີນພ້ອມພໍ່າກັນ ຊອບແລ້ວ!

ແປໂດຍ: ອາຈານ ແສງຈັນ ສຸຂະເສມ
ຮຽບຮຽງເປັນກອນໂດຍ: ກົງໃຈ ແສງອຳພັນ


# ເບີໂທສຸກເສີນ

❑ ຕຳຫລວດ

- ປກສ ນະຄອນຫລວງ 021 419119
- ກົມຕຳຫລວດສືບສວນ-ສອບສວນ 021 970093
- ກົມຕຳຫລວດປ້ອງກັນຢາເສບຕິດ 021 217258
- ກົມຕຳຫລວດເສດຖະກິດ 021 212519
- ກົມຕຳຫລວດຈະລາຈອນ 021 900927
- ກົມຕຳຫລວດສະກັດກັ້ນ ແລະຕ້ານການຄ້າມະນຸດ 021 970543
- ກົມຕຳຫລວດກວດຄົນເຂົ້າເມືອງ (ຕມ) 021 251287
- ກົມຄຸ້ມຄອງຄົນຕ່າງປະເທດ 021 212520
- ສາຍດ່ວນ 1191

❑ ໜ່ວຍກູ້ໄພ

- ສະມາຄົມອາສາກູ້ໄພນະຄອນຫລວງ 1624
- ໜ່ວຍກູ້ໄພມູນນິທິຊ່ວຍເຫລືອຄົນທຸກຍາກ 1623
- ໜ່ວຍຊ່ວຍເຫລືອຜູ້ປະສົບໄພ ອົງການກາແດງ 1625
- ມູນນິທິ ກູ້ໄພ ບາຄາ 1513

❑ ໂຮງໝໍ

- ມະໂຫສົດ 021 214018
- ມິດຕະພາບ 150 ຕຽງ 021 710006
- ເຊດຖາທິລາດ 021 351156
- ສູນຮັບແຈ້ງໄຂ້ຫວັດສັດປີກ 166

## ລັດຖະມົນຕີ...

ຕ້ອງໄດ້ມີການປັບປຸງລະບົບອົງການໄອຍະການທະຫານ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ.

2. ຍົກສູງພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການໄອຍະການທະຫານ ແຕ່ລະຂັ້ນ ໃນການຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ຂອງການຈັດຕັ້ງ, ກົມກອງ, ນາຍ ແລະ ພົນທະຫານ, ກຳມະກອນ, ພາລະກອນປ້ອງກັນຊາດ ແລະ ຂອງບຸກຄົນນອກກອງທັບ ທີ່ກະທຳຜິດໃນເຂດຍຸດທະສາດການທະຫານ, ເຂດຕັ້ງທັບຂອງທະຫານ ແລະ ສັ່ງຟ້ອງຜູ້ຖືກຫາຂຶ້ນສານທະຫານຕາມກົດໝາຍ ໃຫ້ມີຄວາມຈະແຈ້ງ, ໂປ່ງໃສ ແລະ ຍຸຕິທຳ.

3. ການຮັບຮອງ ແລະ ປະກາດໃຊ້ ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ໃນປີ 2017 ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ໃນປີ 2017 ມີຄວາມຈຳເປັນ ທີ່ຕ້ອງໄດ້ປັບປຸງກົດໝາຍ ວ່າດ້ວຍອົງການໄອຍະການທະຫານ ໃຫ້ມີຄວາມສອດຄ່ອງ ແລະ ກົມກຽວກັນ.

ສຳລັບບັນດາເນື້ອໃນທີ່ສະເໜີປັບປຸງ:

- ກົດໝາຍວ່າດ້ວຍອົງການໄອຍະການທະຫານ ສະບັບປະຈຸບັນ ມີທັງໝົດ IX ພາກ, 9 ໝວດ, 65 ມາດຕາ;

- ກົດໝາຍວ່າດ້ວຍອົງການໄອຍະການທະຫານ ສະບັບປັບປຸງ ປະກອບມີ IX ພາກ, 9 ໝວດ, 66 ມາດຕາ; ໃນນີ້, ຮັກສາໄວ້ມີ 22 ມາດຕາ, ຂຽນໃໝ່ 6 ມາດຕາ, ປັບປຸງ 38 ມາດຕາ

ພາກທີ I ບົດບັນຍັດທົ່ວໄປ ປະກອບມີ 10 ມາດຕາ, ປັບປຸງ 10 ມາດຕາ ມີລາຍລະອຽດດັ່ງນີ້:

- ປັບປຸງ ມາດຕາ 1 ຈຸດປະສົງ, ມາດຕາ 2 ອົງການໄອຍະການທະຫານ, ມາດຕາ 3 ການອະທິບາຍຄຳສັບ,ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານອົງການໄອຍະການທະຫານ, ມາດຕາ 5 ຫລັກການກ່ຽວກັບວຽກງານຂອງອົງການໄອຍະການທະຫານ, ມາດຕາ 6 ຂອບເຂດການດຳເນີນຄະດີຂອງອົງການໄອຍະການທະຫານ, ມາດຕາ 7 ການພິຈາລະນາຄຳຮ້ອງຟ້ອງ ແລະ ຄຳສະເໜີ, ມາດຕາ 8 ການປົກປ້ອງ, ມາດຕາ 9 ຂອບເຂດການນຳໃຊ້ກົດໝາຍ ແລະ ມາດຕາ 10 ການຮ່ວມມືສາກົນ.

ພາກທີ II ອົງການໄອຍະການທະຫານ ປະກອບມີ 3 ໝວດ, 23 ມາດຕາ, ປັບປຸງ 15 ມາດຕາ, ຮັກສາ 2 ມາດຕາ, ຂຽນໃໝ່ 6 ມາດຕາ ລາຍລະອຽດ ດັ່ງນີ້:

ໝວດທີ 1 ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່, ປະກອບມີ 2 ມາດຕາ ປັບປຸງ 2 ມາດຕາ.

- ປັບປຸງ ມາດຕາ 11 ທີ່ຕັ້ງ ແລະ ພາລະບົດບາດຂອງອົງການໄອຍະການທະຫານ, ມາດຕາ 12 ສິດ ແລະ ໜ້າທີ່ ຂອງອົງການໄອຍະການທະຫານ.

ໝວດທີ 2 ລະບົບການຈັດຕັ້ງຂອງອົງການໄອຍະການທະຫານ ປະກອບມີ 7 ມາດຕາ, ປັບປຸງ 4 ມາດຕາ,ຮັກສາ 1 ມາດຕາ, ຂຽນໃໝ່ 2 ມາດຕາ.

- ປັບປຸງ ມາດຕາ 13 ລະບົບການຈັດຕັ້ງຂອງອົງການໄອຍະການທະຫານ, ມາດຕາ 14 ອົງການໄອຍະການທະຫານຂັ້ນສູງ, ມາດຕາ 15 ສິດ ແລະ ໜ້າທີ່ ຂອງອົງການໄອຍະການທະຫານຂັ້ນສູງ, ມາດຕາ 17 ສິດ ແລະ ໜ້າທີ່ ຂອງອົງການໄອຍະການທະຫານພາກ.

- ຮັກສາ ມາດຕາ 16 ອົງການໄອຍະການທະຫານພາກຂຽນໃໝ່ ມາດຕາ 18 ອົງການໄອຍະການທະຫານ ແຂວງ, ນະຄອນຫລວງ, ມາດຕາ 19 ສິດ ແລະ ໜ້າທີ່ ຂອງອົງການໄອຍະການທະຫານ ແຂວງ, ນະຄອນຫລວງ.

ໝວດທີ 3 ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ ປະກອບມີ 14 ມາດຕາ, ປັບປຸງ 9 ມາດຕາ, ຮັກສາ 1 ມາດຕາ, ຂຽນໃໝ່ 4 ມາດຕາ.

- ປັບປຸງ ມາດຕາ 20 ໂຄງປະກອບການຈັດຕັ້ງ, ມາດຕາ 23 ໂຄງປະກອບບຸກຄະລາກອນ, ມາດຕາ 24 ມາດຕະຖານຂອງຫົວໜ້າ, ຮອງຫົວໜ້າ ແລະ ພະນັກງານໄອຍະການທະຫານ, ມາດຕາ 25 ການແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງ, ມາດຕາ 26 ສິດ ແລະ ໜ້າທີ່ ຂອງຫົວໜ້າອົງການໄອຍະການທະຫານຂັ້ນສູງ, ມາດຕາ 27 ຮອງຫົວໜ້າອົງການໄອຍະການທະຫານຂັ້ນສູງ, ມາດຕາ 28 ສິດ ແລະ ໜ້າທີ່ຂອງຫົວໜ້າອົງການໄອຍະການທະຫານພາກ, ມາດຕາ 29 ຮອງຫົວໜ້າອົງການໄອຍະການທະຫານພາກ, ມາດຕາ 32 ສິດ ແລະ ໜ້າທີ່ ຂອງພະນັກງານໄອຍະການທະຫານ.

- ຮັກສາ ມາດຕາ 33 ສິດ ແລະ ໜ້າທີ່ຂອງຜູ້ຊ່ວຍພະນັກງານໄອຍະການທະຫານ.

- ຂຽນໃໝ່ ມາດຕາ 21 ຄະນະກຳມະການໄອຍະການທະຫານຂັ້ນສູງ, ມາດຕາ 22 ສິດ ແລະ ໜ້າທີ່ ຂອງຄະນະກຳມະການໄອຍະການທະຫານຂັ້ນສູງ, ມາດຕາ 30 ສິດ ແລະ ໜ້າທີ່ ຂອງຫົວໜ້າອົງການໄອຍະການທະຫານ ແຂວງ, ນະຄອນຫລວງ, ມາດຕາ 31 ຮອງຫົວໜ້າອົງການໄອຍະການທະຫານແຂວງ, ນະຄອນຫລວງ.

ພາກທີ III ການເຄື່ອນໄຫວຂອງອົງການໄອຍະການທະຫານ ປະກອບມີ 6 ໝວດ, 17 ມາດຕາ, ປັບປຸງ 8 ມາດຕາ, ຮັກສາ 9 ມາດຕາ, ລາຍລະອຽດ ດັ່ງນີ້:

ໝວດທີ 1 ການຕິດຕາມກວດກາທົ່ວໄປ ປະກອບມີ 3 ມາດຕາ, ປັບປຸງ 3 ມາດຕາ.

- ປັບປຸງ ມາດຕາ 34 ການຕິດຕາມກວດກາທົ່ວໄປ, ມາດຕາ 35 ສິດ ແລະ ໜ້າທີ່ ຂອງອົງການໄອຍະການທະຫານ ໃນການຕິດຕາມກວດກາທົ່ວໄປ, ມາດຕາ 36 ພັນທະບັງຄັບປະຕິບັດນິຕິກຳ ຂອງອົງການໄອຍະການທະຫານ.

ໝວດທີ 2 ການຕິດຕາມກວດກາການປະຕິບັດກົດໝາຍ ຂອງອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ທະຫານ ປະກອບມີ 3 ມາດຕາ ປັບປຸງ 1 ມາດຕາ ຮັກສາ 2 ມາດຕາ.

- ປັບປຸງ ມາດຕາ 39 ພັນທະບັງຄັບ ປະຕິບັດນິຕິກຳ ຂອງອົງການໄອຍະການທະຫານ ຕໍ່ອົງການສືບສວນ-ສອບສວນ.

- ຮັກສາ ມາດຕາ 37 ການຕິດຕາມກວດກາການປະຕິບັດກົດໝາຍ ຂອງອົງການສືບສວນ-ສອບສວນ, ມາດຕາ 38 ສິດ ແລະ ໜ້າທີ່ ຂອງອົງການໄອຍະການທະຫານ ໃນການຕິດຕາມກວດກາການປະຕິບັດກົດໝາຍ ຂອງອົງການສືບສອບ-ສອບສວນ.

ໝວດທີ 3 ການສັ່ງຟ້ອງຂຶ້ນສານ ປະກອບມີ 2 ມາດຕາ, ປັບປຸງ 1 ມາດຕາ, ຮັກສາ 1 ມາດຕາ.

- ປັບປຸງ ມາດຕາ 41 ການສັ່ງຟ້ອງ ແລະ ການຖະແຫລງຂຶ້ນສານ.

- ຮັກສາ ມາດຕາ 40 ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ.

ໝວດທີ 4 ການຕິດຕາມກວດກາການປະຕິບັດກົດໝາຍ ໃນການດຳເນີນຄະດີອາຍາຢູ່ສານທະຫານ ປະກອບມີ 2 ມາດຕາ, ຮັກສາ 2 ມາດຕາ

- ຮັກສາ ມາດຕາ 42 ການຕິດຕາມກວດກາການປະຕິບັດກົດໝາຍ ໃນການດຳເນີນຄະດີອາຍາຢູ່ສານທະຫານ, ມາດຕາ 43 ສິດ ແລະ ໜ້າທີ່ຂອງອົງການໄອຍະການທະຫານ ໃນການຕິດຕາມກວດກາການປະຕິບັດກົດໝາຍ ໃນການດຳເນີນຄະດີອາຍາຢູ່ສານທະຫານ.

ໝວດທີ 5 ການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານທະຫານ ປະກອບມີ 3 ມາດຕາ, ປັບປຸງ2 ມາດຕາ, ຮັກສາ 1 ມາດຕາ.

- ປັບປຸງ ມາດຕາ 45 ສິດ ແລະ ໜ້າທີ່ ຂອງອົງການໄອຍະການທະຫານໃນການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານທະຫານ ແລະ ມາດຕາ 46 ພັນທະບັງຄັບປະຕິບັດນິຕິກຳ ຂອງອົງການໄອຍະການທະຫານ ສຳລັບພະນັກງານປະຕິບັດຄຳຕັດສິນຂອງສານທະຫານ;

- ຮັກສາ ມາດຕາ 44 ການຕິດຕາມກວດກາການປະຕິບັດຄຳຕັດສິນ ຂອງສານທະຫານ.

ໝວດທີ 6 ການຕິດຕາມກວດກາການປະຕິບັດກົດໝາຍໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ ແລະ ຄ້າຍຄຸມຂັງ-ດັດສ້າງ ປະກອບມີ 4 ມາດຕາ, ປັບປຸງ 1 ມາດຕາ, ຮັກສາ 3 ມາດຕາ.

- ປັບປຸງ ມາດຕາ 48 ສິດ ແລະ ໜ້າທີ່ ຂອງອົງການໄອຍະການທະຫານໃນການຕິດຕາມກວດກາສະຖານທີ່ກັກຕົວ, ສະຖານທີ່ກັກຂັງ ແລະ ຄ້າຍຄຸມຂັງ-ດັດສ້າງ,

- ຮັກສາ ມາດຕາ 47 ການຕິດຕາມກວດກາການປະຕິບັດກົດໝາຍ ໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ ແລະ ຄ້າຍຄຸມຂັງ-ດັດສ້າງ, ມາດຕາ 49 ຄວາມຮັບຜິດຊອບໃນການສົ່ງຄຳຮ້ອງທຸກ ຂອງຜູ້ຖືກຫາ, ຈຳເລີຍ, ຜູ້ຖືກດັດສ້າງ ແລະ ນັກໂທດ ແລະ ມາດຕາ 50 ພັນທະບັງຄັບປະຕິບັດນິຕິກຳ ຂອງອົງການໄອຍະການທະຫານ ສຳລັບເຈົ້າໜ້າທີ່ສະຖານທີ່ກັກຕົວ, ສະຖານທີ່ກັກຂັງ ແລະ ຄ້າຍຄຸມຂັງ-ດັດສ້າງ.

ພາກທີ IV ລະບອບວິທີເຮັດວຽກ ປະກອບມີ 2 ມາດຕາ, ຮັກສາ 2 ມາດຕາ ລາຍລະອຽດ ດັ່ງນີ້:

- ຮັກສາ ມາດຕາ 51 ລະບອບເຮັດວຽກ ແລະ ມາດຕາ 52 ວິທີເຮັດວຽກ

ພາກທີ V ຂໍ້ຫ້າມ ປະກອບມີ 3 ມາດຕາ, ປັບປຸງ 1 ມາດຕາ, ຮັກສາ 2 ມາດຕາ ລາຍລະອຽດ ດັ່ງນີ້:

- ປັບປຸງ ມາດຕາ 55 ຂໍ້ຫ້າມສຳລັບ ນາຍ ແລະ ພົນທະຫານ, ກຳມະກອນ, ພາລະກອນ ປ້ອງກັນຊາດ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ

- ຮັກສາ ມາດຕາ 53 ຂໍ້ຫ້າມສຳລັບພະນັກງານອົງການໄອຍະການທະຫານ, ແລະ ມາດຕາ 54 ຂໍ້ຫ້າມ ສຳລັບຜູ້ເຂົ້າຮ່ວມໃນການດຳເນີນຄະດີ.

ພາກທີ VI ການຕິດຕາມກວດກາອົງການໄອຍະການທະຫານ ປະກອບມີ 3 ມາດຕາ, ຮັກສາ 3 ມາດຕາ ລາຍລະອຽດ ດັ່ງນີ້:

- ຮັກສາ ມາດຕາ 56 ການຕິດຕາມກວດກາອົງການໄອຍະການທະຫານ, ມາດຕາ 57 ເນື້ອໃນການຕິດຕາມກວດກາ ແລະ ມາດຕາ 58 ຮູບການການຕິດຕາມກວດກາ.

ພາກທີ VII ວັນສ້າງຕັ້ງ, ກາໝາຍ, ບັດປະຈຳການ, ຕາປະທັບ ແລະ ງົບປະມານ ຂອງອົງການໄອຍະການທະຫານ ປະກອບມີ 4 ມາດຕາ, ປັບປຸງ 3 ມາດຕາ, ຮັກສາ 1 ມາດຕາ.

- ປັບປຸງ ມາດຕາ 60 ກາໝາຍ ແລະ ບັດປະຈຳການ ຂອງອົງການໄອຍະການທະຫານ, ມາດຕາ 61 ຕາປະທັບຂອງອົງການໄອຍະການທະຫານ ແລະ ມາດຕາ 62 ງົບປະມານຂອງອົງການໄອຍະການທະຫານ,

- ຮັກສາ ມາດຕາ 59 ວັນສ້າງຕັ້ງອົງການໄອຍະການທະຫານ.

ພາກທີ VIII ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ ປະກອບມີ 2 ມາດຕາ, ຮັກສາ 2 ມາດຕາ ລາຍລະອຽດ ດັ່ງນີ້:

- ຮັກສາ ມາດຕາ 63 ນະໂຍບາຍຕໍ່ຜູ້ມີຜົນງານ, ມາດຕາ 64 ມາດຕະການຕໍ່ຜູ້ລະເມີດ.

ພາກທີ IX ບົດບັນຍັດສຸດທ້າຍ ປະກອບມີ 2 ມາດຕາ, ປັບປຸງ 1 ມາດຕາ, ຮັກສາ 1 ມາດຕາ ລາຍລະອຽດດັ່ງນີ້:

- ປັບປຸງ ມາດຕາ 66 ຜົນສັກສິດ.

- ຮັກສາ ມາດຕາ 65 ການຈັດຕັ້ງປະຕິບັດ.

## ສສຊ...

ບັດຕົວຈິງ ແລະ ຍັງມີຫລາຍບັນຫາທີ່ເກີດຂຶ້ນຕົວຈິງ ທີ່ບໍ່ໄດ້ກຳນົດໃນກົດໝາຍສະບັບນີ້ ເປັນຕົ້ນແມ່ນມາດຕະການທາງດ້ານສັງຄົມ, ການຮັກສາໄລຍະຫ່າງ, ການລາຍງານ, ການຈຳກັດບໍລິເວນ, ການກຳນົດເຂດການລະບາດ, ການກຳນົດກ່ຽວກັບມາດຕະການຕໍ່ຜູ້ທີ່ລະເມີດກົດໝາຍ ຍັງບໍ່ທັນລະອຽດ ແລະ ຮັດກຸມ ເຊິ່ງພາໃຫ້ມີຜູ້ທີ່ເຈຕະນາແຜ່ເຊື້ອພະຍາດຕິດຕໍ່ໃຫ້ບຸກຄົນອື່ນ, ປົດບັງຂໍ້ມູນ ກ່ຽວກັບການເກີດພະຍາດຕິດຕໍ່, ບໍ່ໃຫ້ການຮ່ວມມືກັບເຈົ້າໜ້າທີ່, ບໍ່ເຂົ້າ ຫລື ລັກໜີຈາກສູນຈຳກັດບໍລິເວນ, ການລັກລອບເຂົ້າເມືອງແບບຜິດກົດໝາຍ, ການໂຮມຊຸມນຸມ ແລະ ອື່ນໆ ຈົນກາຍເປັນບັນຫາທີ່ພົ້ນເດັ່ນໃນສັງຄົມ ແລະ ເປັນສິ່ງທ້າທາຍ, ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງພະນັກງານແພດໝໍ ແລະ ເຈົ້າໜ້າທີ່ສາທາລະນະສຸກ ຍັງບໍ່ທັນປະຕິບັດໄດ້ຕາມກົດໝາຍທີ່ໄດ້ກຳນົດໄວ້, ການແບ່ງຂັ້ນຄຸ້ມຄອງ, ແບ່ງຄວາມຮັບຜິດຊອບ ລະຫວ່າງສູນກາງ ແລະ ທ້ອງຖິ່ນ ຍັງມີຫລາຍຈຸດທີ່ບໍ່ທັນຈະແຈ້ງ ແລະ ເປັນເອກະພາບກັນ, ການຈັດຕັ້ງປະຕິບັດມີການຊ້ຳຊ້ອນ ໂດຍສະເພາະວຽກງານຄວບຄຸມພະຍາດຕິດຕໍ່ ໃນໄລຍະຜ່ານມາ ເຫັນວ່ານອກຈາກການນຳໃຊ້ມາດຕະການທາງດ້ານສາທາລະນະສຸກແລ້ວ ຍັງໄດ້ນຳໃຊ້ມາດຕະການທາງດ້ານສັງຄົມ ແລະ ມາດຕະການອື່ນໆທີ່ຈຳເປັນ ເພື່ອເຮັດໃຫ້ສາມາດຄວບຄຸມການລະບາດຂອງພະຍາດຕິດຕໍ່ໄດ້ຢ່າງທັນການ ກໍຄືບໍ່ໃຫ້ແຜ່ລະບາດໄປສູ່ວົງກວ້າງ ແລະ ບັນຫາອື່ນໆ.

ໃນໂອກາດດຽວກັນ, ປະທານກອງປະຊຸມ ໄດ້ມີຄຳເຈາະຈີ້ມ ແລະ ໃຫ້ທິດຊີ້ນຳໃນການຄົ້ນຄວ້າປະກອບຄຳເຫັນໃສ່ຮ່າງກົດໝາຍ 3 ສະບັບດັ່ງກ່າວ ແລະ ບັນດາທ່ານສະມາຊິກສະພາແຫ່ງຊາດ ກໍໄດ້ສຸມໃສ່ຄົ້ນຄວ້າປະກອບຄຳຄິດຄຳເຫັນຢ່າງມີເຫດມີຜົນ ແລະ ກົງໄປກົງມາ ທັງໄດ້ຮັບຟັງການໃຫ້ຄວາມກະຈ່າງແຈ້ງຕໍ່ບັນຫາທີ່ສະມາຊິກສະພາແຫ່ງຊາດ ໃຫ້ຄວາມສົນໃຈ ຈາກຄະນະຮັບຜິດຊອບປັບປຸງຮ່າງກົດໝາຍສະບັບດັ່ງກ່າວ.

(ນາງ ປາກາລັກ ພົມມີໄຊ)

ທະນາຄານພັດທະນາລາວ LDB Bank

ທະນາຄານພົງສະຫວັນ Phongsavanh BANK







| ແຂວງ | ພາຍໃນ | ນຳເຂົ້າ | ແຂວງ | ພາຍໃນ | ນຳເຂົ້າ |
|---|---|---|---|---|---|
| • ນະຄອນຫຼວງວຽງຈັນ | 11 | 0 | • ຄຳມ່ວນ | 0 | 0 |
| • ສະຫວັນນະເຂດ | 5 | 1 | • ຫຼວງພະບາງ | 0 | 0 |
| • ອຸດົມໄຊ | 4 | 0 | • ສາລະວັນ | 0 | 0 |
| • ບໍລິຄຳໄຊ | 3 | 0 | • ໄຊສົມບູນ | 0 | 0 |
| • ຈຳປາສັກ | 3 | 0 | • ບໍ່ແກ້ວ | 0 | 0 |
| • ວຽງຈັນ | 1 | 0 | • ຫົວພັນ | 0 | 0 |
| • ໄຊຍະບູລີ | 0 | 0 | • ຜົ້ງສາລີ | 0 | 0 |
| • ເຊກອງ | 0 | 0 | • ຊຽງຂວາງ | 0 | 0 |
| • ຫຼວງນ້ຳທາ | 0 | 0 | • ອັດຕະປື | 0 | 0 |




## ສັດຈະທຳ

\# ໂດຍ: ປ່າວກະບື

"ຂ້າພະເຈົ້າຫາກໍ່ໄດ້ຮັບຜົນສຳເລັດ ໃນການຜະລິດເຄື່ອງດື່ມ 'ສັດຈະທຳ', ພຽງແຕ່ດື່ມຢອດດຽວ, ແລ້ວທ່ານກໍຈະສາມາດບອກຄວາມຈິງໄດ້ໂລດ"

"ໃຫ້ເຮົາລອງຊີມເບິ່ງດູ... ອຸ່ຍ ມັນແມ່ນນ້ຳມັນກາດຕື່ອນີ້!"

"ນັ້ນແລ້ວຄືສັດຈະທຳ!"

## THE TRUTH

\# By: BAOKBU

"I've just invented a truth drink. One sip and you'll tell the truth".

"May I try some?... Ugh! that's kerosene!"

"that's the truth!"

# 17 ພັກການເມືອງຂອງອິນໂດເນເຊຍ ມີສິດເຂົ້າຮັບເລືອກຕັ້ງທົ່ວໄປ ໃນປີ 2024

ແປ ແລະ ຮຽບຮຽງ: ນາກ ເມືອງມະໂນ




ລາຍງານຂ່າວເມື່ອທ້າຍອາທິດຜ່ານມາ ໃຫ້ຮູ້ວ່າ: ໂດຍອີງຕາມສຳນັກຂ່າວສານອັນຕາຣາ ເຊິ່ງເປັນຂ່າວສານທາງການຂອງອິນໂດເນເຊຍ ໄດ້ລາຍງານວ່າ: ຄະນະກຳມະການການເລືອກຕັ້ງອິນໂດເນເຊຍ ປະກາດວ່າ: ມີ 17 ພັກການເມືອງ ໄດ້ຮັບສິດເຂົ້າຮ່ວມການເລືອກຕັ້ງທົ່ວໄປ ທີ່ຈະຈັດຂຶ້ນໃນປີ 2024.

ທ່ານ ຮາຊິມ ປະທານຄະນະກຳມະການການເລືອກຕັ້ງອິນໂດເນເຊຍ ເປີດເຜີຍວ່າ: ຄະນະກຳມະການການເລືອກຕັ້ງອິນໂດເນເຊຍ ໄດ້ກວດກາບັນດາພັກການເມືອງ ທັງໝົດ 18 ພັກການເມືອງທົ່ວປະເທດທີ່ໄດ້ຮ້ອງຂໍເພື່ອເຂົ້າຮ່ວມການເລືອກຕັ້ງໃນປີ 2024 ປາກົດວ່າ, ມີ 17 ພັກການເມືອງ ໄດ້ຮັບຄຸນວຸດທິ ແລະ ມີສິດເຂົ້າຮ່ວມການເລືອກຕັ້ງທີ່ຈະມີຂຶ້ນ.

ໃນ 17 ພັກການເມືອງດັ່ງກ່າວ, ມີ 9 ພັກການເມືອງທີ່ມີບ່ອນນັ່ງໃນລັດຖະສະພາຊຸດປັດຈຸບັນ ແລະ ອີກ 8 ພັກການເມືອງບໍ່ມີບ່ອນນັ່ງ. ສຳລັບພັກການເມືອງທີ່ບໍ່ມີບ່ອນນັ່ງໃນລັດຖະສະພາຊຸດປັດຈຸບັນ ມີ 5 ພັກການເມືອງໄດ້ບັດເລືອກຕັ້ງບໍ່ຮອດ 4% ໃນການເລືອກຕັ້ງທົ່ວໄປເມື່ອປີ 2019 ແລະ ອີກ 3 ພັກການເມືອງແມ່ນສ້າງຕັ້ງຂຶ້ນໃໝ່.

ອີງຕາມລັດຖະທຳມະນູນອິນໂດເນເຊຍ ລະບຸວ່າ: ການເລືອກຕັ້ງທົ່ວໄປຈະຈັດຂຶ້ນ 5 ປີຕໍ່ຄັ້ງ, ເພື່ອເລືອກຕັ້ງປະທານາທິບໍດີ ແລະ ຮອງປະທານາທິບໍດີ, ສະມາຊິກສະພາຕ່ຳ ແລະ ສະພາສູງຂອງລັດຖະສະພາ, ສະມາຊິກສະພາລະດັບແຂວງ, ລະດັບນະຄອນ ແລະ ເມືອງ, ປະທານາທິບໍດີທີ່ໄດ້ຮັບການເລືອກຕັ້ງສາມາດດຳລົງຕຳແໜ່ງສອງສະໄໝຕິດຕໍ່ກັນ.

**ແຫລ່ງຂ່າວ: CRI**

# WHO ເຕືອນວັກຊີນປ້ອງກັນພະຍາດອະຫິວາກຳລັງຈະໝົດ

ແປ ແລະ ຮຽບຮຽງ: ທະນາກອນ



ເຈົ້າໜ້າທີ່ຂອງອົງການອະນາໄມໂລກ (WHO) ກ່າວໃນວັນທີ 16 ທັນວາວ່າ: ສະຕັອກວັກຊີນປ້ອງກັນພະຍາດອະຫິວາທົ່ວໂລກທີ່ WHO ຊ່ວຍຈັດການນັ້ນ "ໝົດ ຫລື ເຫລືອໜ້ອຍແລ້ວ" ທ່າມກາງການລະບາດຮອບໃໝ່ທີ່ເກີດຂຶ້ນທົ່ວໂລກ.

ອີງຕາມການລາຍງານຂ່າວໃນອາທິດຜ່ານມາ ໃຫ້ຮູ້ວ່າ: WHO ລະບຸວ່າ: ອັດຕາການເສຍຊີວິດທົ່ວໂລກກຳລັງເພີ່ມຂຶ້ນ ແລະ ປະມານ 30 ປະເທດທົ່ວໂລກມີລາຍງານການແຜ່ລະບາດຂອງພະຍາດອະຫິວາໃນປີນີ້ ເຊິ່ງສູງກວ່າປະມານ 1 ໃນ 3 ຂອງປີປົກກະຕິ.

ທ່ານ ດຣ. ຟີລິບ ເປ ບາໂບຊາ ຜູ້ນຳທີມຝ່າຍພະຍາດອະຫິວາ ແລະ ພະຍາດຖອກທ້ອງລະບາດຂອງ WHO ກ່າວວ່າ: "ພວກເຮົາບໍ່ມີວັກຊີນແລ້ວ, ແຕ່ຫລາຍປະເທດຍັງຮ້ອງຂໍວັກຊີນຢ່າງຕໍ່ເນື່ອງ ແລະ ມັນເປັນເລື່ອງທີ່ທ້າທາຍຢ່າງຍິ່ງ".

ທ່ານຍັງກ່າວຕື່ມວ່າ: ເຖິງສາງສິນຄ້າສຸກເສີນທີ່ຈັດໂດຍກຸ່ມປະສານງານລະຫວ່າງປະເທດ (ICG) ວ່າດ້ວຍການຈັດຫາວັກຊີນ ທີ່ບໍລິຫານຈັດການໂດຍ WHO ແລະ ຫຸ້ນສ່ວນອື່ນໆ ເຊິ່ງຕາມປົກກະຕິ ສະຕັອກຈະມີວັກຊີນປະມານ 36 ລ້ານໂດສຕໍ່ປີ, ແຕ່ການຂາດເຂີນວັກຊີນທີ່ເກີດຂຶ້ນສົ່ງຜົນໃຫ້ WHO ໂຈະມາດຕະການການສັກວັກຊີນ 2 ໂດສຕາມມາດຕະຖານຊົ່ວຄາວ ໃນເດືອນຕຸລາຜ່ານມາ.

ນອກຈາກນີ້, ທ່ານ ດຣ. ຟີລິບ ເປ ບາໂບຊາ ຍັງກ່າວອີກວ່າ: ສ່ວນໜຶ່ງຂອງບັນຫາເກີດຈາກການຕັດສິນໃຈຂອງຜູ້ຜະລິດໃນອິນເດຍ ທີ່ຈະຢຸດການສົ່ງອອກວັກຊີນໂດຍບໍ່ໃຫ້ລາຍລະອຽດ ເຊິ່ງເຖິງວ່າຜູ້ຜະລິດໃນອາຟຣິກາໃຕ້ກຳລັງວາງແຜນເລີ່ມການຜະລິດ, ແຕ່ຕ້ອງໃຊ້ເວລາ "2-3 ປີ".

ການພັດທະນາວັກຊີນສຳລັບພະຍາດອະຫິວາ ຫລື ອີກຢ່າງໜຶ່ງຄືວັກຊີນສຳລັບປະເທດທີ່ທຸກຍາກ ອາດມີຄວາມໜ້າສົນໃຈໜ້ອຍກວ່າການພັດທະນາວັກຊີນປ້ອງກັນພະຍາດໂຄວິດ-19 ເຊິ່ງສ້າງລາຍໄດ້ສູງກວ່າຫລາຍ; ທ່ານ ດຣ. ຟີລິບ ເປ ບາໂບຊາ ກ່າວວ່າ: ມັນເປັນເລື່ອງທີ່ຍອມຮັບບໍ່ໄດ້ໃນສະຕະວັດທີ 21 ໃນການມີຜູ້ເສຍຊີວິດຈາກພະຍາດເຊິ່ງເປັນທີ່ຮູ້ຈັກກັນດີ ແລະ ປິ່ນປົວໄດ້ງ່າຍ.

ນອກເໜືອຈາກບັນດາປະເທດທີ່ເກີດການລະບາດ ເຊິ່ງສ່ວນຫລາຍປະເທດທີ່ໄດ້ຮັບຜົນກະທົບຈາກຄວາມທຸກຍາກ ແລະ ຄວາມຂັດແຍ່ງ ເຊັ່ນ ໄຮຕີ ແລະ ເຢແມນປະເທດທີ່ມີລາຍໄດ້ປານກາງຄືເລບານອນ ກໍມີລາຍງານການລະບາດເຊັ່ນກັນ ໂດຍລະບຸວ່າ: ສິ່ງນີ້ອາດເປັນ "ສັນຍານເຕືອນ" ສຳລັບປະເທດອື່ນໆ.

**ແຫລ່ງຂ່າວ: REUTERS**

## ສະເໜີ...

ຫລື ບໍ່ໄດ້ດີເທົ່າທີ່ຄວນ ເຊັ່ນ:

1) ມາດຕາ 5 ກ່ຽວກັບຫລັກການການເຄື່ອນໄຫວວຽກງານກວດສອບແຫ່ງລັດ ຍັງບໍ່ຄົບຖ້ວນ,

2) ມາດຕາ 6 ກ່ຽວກັບມາດຕະຖານ ການກວດສອບແຫ່ງລັດ ກຳນົດບໍ່ຈະແຈ້ງ, ບໍ່ຮັດກຸມ ເຮັດໃຫ້ການຜັນຂະຫຍາຍ ເປັນນິຕິກຳໃຕ້ກົດໝາຍ ມີຂໍ້ຈຳກັດ;

3) ມາດຕາ 10 ກ່ຽວກັບຂັ້ນຕອນການເຄື່ອນໄຫວວຽກງານກວດສອບແຫ່ງລັດ ບໍ່ໄດ້ກຳນົດກ່ຽວກັບຂັ້ນຕອນການສ້າງ ແລະ ການດັດແກ້ແຜນການກວດສອບ, ໃນກໍລະນີມີເຫດການບໍ່ຄາດຄິດບັງເອີນເກີດຂຶ້ນກະທົບໃສ່ແຜນການເຄື່ອນໄຫວ ເຮັດໃຫ້ບໍ່ສາມາດບັນລຸຕາມຈຳນວນເປົ້າໝາຍ ທີ່ໄດ້ກຳນົດໄວ້ເບື້ອງຕົ້ນ;

4) ມາດຕາ 16 ກ່ຽວກັບການສ້າງບົດບັນທຶກຜົນການກວດສອບ ເຫັນວ່າຍັງມີຄວາມຊັກຊ້າ, ແກ່ຍາວເວລາ, ຄຸນນະພາບຜົນການກວດສອບ ຍັງບໍ່ທັນຮັບປະກັນເທົ່າທີ່ຄວນ;

5) ມາດຕາ 17 ແລະ ມາດຕາ 32 ຂໍ້ 17 ກ່ຽວກັບ ການສ້າງ ແລະ ສົ່ງບົດສະຫລຸບຜົນການກວດສອບຍັງບໍ່ກຳນົດຢ່າງຈະແຈ້ງ ກ່ຽວກັບປະເພດບົດສະຫລຸບຜົນການກວດສອບ ເຮັດໃຫ້ການສ້າງ ແລະ ສັງລວມທັງການຮັບຮອງເອົາບົດສະຫລຸບຜົນການກວດສອບໃນແຕ່ລະໄລຍະ ບໍ່ເປັນເອກະພາບກັນ;

6) ມາດຕາ 19 ກ່ຽວກັບການແກ້ໄຂຜົນການກວດສອບ ໂດຍສະເພາະແມ່ນ ຂໍ້ທີ 2 ແລະ ຂໍ້ທີ 3 ຍັງກຳນົດເນື້ອໃນບໍ່ຈະແຈ້ງ ເຮັດໃຫ້ມີຄວາມເຂົ້າໃຈຄາດເຄື່ອນໃນການຈັດຕັ້ງປະຕິບັດ, ສ່ວນໃຫຍ່ເຂົ້າໃຈວ່າແມ່ນອົງການກວດສອບແຫ່ງລັດ ເປັນຜູ້ແກ້ໄຂຜົນການກວດສອບ ຫລື ດຳເນີນການຮ້ອງຟ້ອງຕໍ່ສານປະຊາຊົນເພື່ອແກ້ໄຂຕາມກົດໝາຍ;

7) ມາດຕາ 26 ກ່ຽວກັບເປົ້າໝາຍຖືກກວດສອບ ຍັງມີບາງເນື້ອໃນບໍ່ທັນຄົບຖ້ວນ, ບໍ່ຈະແຈ້ງ ເຮັດໃຫ້ບາງເປົ້າໝາຍຖືກກວດສອບບໍ່ຢາກໃຫ້ອົງການກວດສອບແຫ່ງລັດດຳເນີນການກວດສອບ, ເຮັດໃຫ້ການສ້າງແຜນການກວດສອບຈຳນວນໜຶ່ງບໍ່ຖືກຈຸດສຸມ;

8) ມາດຕາ 27 ກ່ຽວກັບກຳນົດເວລາກວດສອບ ກຳນົດບໍ່ຈະແຈ້ງ, ເຖິງວ່າເປົ້າໝາຍທີ່ຈະດຳເນີນການກວດສອບ ມີທັງບ່ອນສະດວກ ແລະ ຫຍຸ້ງຍາກ ກໍກຳນົດເວລາກວດສອບ ແບບຕາຍຕົວ ຫລື ແບບດຽວກັນ ໃນລະຫວ່າງ 15 ຫາ 30 ວັນ ຕໍ່ໜຶ່ງເປົ້າໝາຍ ເຊິ່ງບາງຄັ້ງກໍບໍ່ພຽງພໍ;

9) ມາດຕາ 51 ກ່ຽວກັບຜູ້ຮ່ວມງານກວດສອບ ຍັງບໍ່ທັນກວມເອົາບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງຈາກພາຍໃນ ແລະ ຕ່າງປະເທດ, ຜ່ານມາກຳນົດໃຫ້ຮ່ວມງານໄດ້ກັບແຕ່ວິສາຫະກິດກວດສອບ ເຊິ່ງດຳເນີນການກວດສອບແຕ່ເອກະສານລາຍງານການເງິນ ຫລື ກວດສອບບັນຊີ, ບໍ່ລົງເລິກກວດສອບການປະຕິບັດພັນທະຕໍ່ງົບປະມານແຫ່ງລັດ, ບໍ່ລົງເລິກ ໃນການກວດສອບດ້ານຄຸນນະພາບເຮັດໃຫ້ການນຳໃຊ້ຜູ້ຮ່ວມງານ ຈາກຂະແໜງວິຊາຊີບຕ່າງໆ ໃນການດຳເນີນການກວດສອບຜົນການຈັດຕັ້ງຕິບັດພົບຄວາມຫຍຸ້ງຍາກ;

10) ງົບປະມານຮັບໃຊ້ ໃນການເຄື່ອນໄຫວກວດສອບມີຈຳກັດເກີນຄວນ ເຮັດໃຫ້ຂາດເຂີນທຶນຮອນວັດຖຸອຸປະກອນ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ໃນການເຄື່ອນໄຫວວຽກງານກວດສອບແຫ່ງລັດ.

ສຳລັບການປັບປຸງ, ໂຄງປະກອບ ແລະ ເນື້ອໃນ ຂອງຮ່າງກົດໝາຍ ທ່ານຍັງໄດ້ກ່າວຕື່ມອີກວ່າ: ຈາກບັນຫາ ແລະ ເຫດຜົນ ທີ່ກ່າວມາຂ້າງເທິງນັ້ນ ຈຶ່ງເຫັນໄດ້ວ່າມີຄວາມຈຳເປັນຕ້ອງໄດ້ປັບປຸງກົດໝາຍດັ່ງກ່າວ ເຊິ່ງການປັບປຸງກົດໝາຍໃນເທື່ອນີ້ ແມ່ນເປັນເທື່ອທີ 4 ນັບແຕ່ສະພາແຫ່ງຊາດ ໄດ້ຮັບຮອງເອົາກົດໝາຍ ວ່າດ້ວຍການກວດສອບ ສະບັບປີ 2007 ເປັນຕົ້ນມາ ເຊິ່ງເທື່ອທີ 1 ໄດ້ປັບປຸງໃນປີ 2012, ເທື່ອທີ 2 ໄດ້ປັບປຸງໃນປີ 2016 ແລະ ເທື່ອທີ 3 ໄດ້ປັບປຸງບາງມາດຕາ ໃນປີ 2020; ການປັບປຸງກົດໝາຍວ່າດ້ວຍການກວດສອບແຫ່ງລັດ ແມ່ນໄດ້ປະຕິບັດຕາມຫລັກການ ທີ່ກົດໝາຍວ່າດ້ວຍການສ້າງນິຕິກຳ, ມະຕິ ວ່າດ້ວຍການຮັບຮອງແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ (2021-2025) ສະບັບເລກທີ 19/ສພຊ ແລະ ປະຈຳປີ 2022 ສະບັບເລກທີ 33/ຄປຈ ໄດ້ກຳນົດໄວ້ ເຊິ່ງໄດ້ດຳເນີນການປັບປຸງຕາມຂັ້ນຕອນ;

ຮ່າງກົດໝາຍວ່າດ້ວຍການກວດສອບແຫ່ງລັດ (ສະບັບປັບປຸງ) ໃນເທື່ອນີ້ ປະກອບມີ XII ພາກເພີ່ມຂຶ້ນ 2 ພາກ; ມີ 13 ໝວດ ເພີ່ມຂຶ້ນ 6 ໝວດ ແລະ ມີ 96 ມາດຕາ ເພີ່ມຂຶ້ນ 21 ມາດຕາ. ໃນນັ້ນ, ປັບປຸງ 64 ມາດຕາ, ສ້າງໃໝ່ 25 ມາດຕາ ແລະ ຮັກສາເນື້ອໃນໄວ້ຄືເກົ່າ 7 ມາດຕາ. ເຊິ່ງບາງຈຸດສຳຄັນຂອງຮ່າງກົດໝາຍໄດ້ປັບປຸງ ແລະ ເພີ່ມໃໝ່ ມີດັ່ງນີ້:

1) ມາດຕາ 18 ກ່ຽວກັບການສ້າງແຜນການກວດສອບ ແລະ ມາດຕາ 19 ກ່ຽວກັບ ການດັດແກ້ແຜນການກວດສອບ ເປັນມາດຕາທີ່ສ້າງໃໝ່ ໂດຍໄດ້ລະບຸຢ່າງຈະແຈ້ງກ່ຽວກັບບັນດາຈຸດສຸມທີ່ຕ້ອງກຳນົດເຂົ້າໃນແຜນກວດສອບ ແລະເງື່ອນໄຂໃນການດັດແກ້ແຜນການກວດສອບ;

2) ມາດຕາ 26 ກ່ຽວກັບກຳນົດເວລາກວດສອບ ໄດ້ປັບປຸງຄືນໃໝ່ໃຫ້ຈະແຈ້ງ ຊຶ່ງກຳນົດເວລາດັ່ງກ່າວແມ່ນກວມເອົາເວລາ ການວາງແຜນການກວດສອບ, ການດຳເນີນການກວດສອບ ແລະ ການສ້າງບົດບັນທຶກຜົນການກວດສອບ,

3) ມາດຕາ 32 ກ່ຽວກັບການສ້າງບົດບັນທຶກຜົນການກວດສອບ ແມ່ນມາດຕາທີ່ສ້າງໃໝ່ ໂດຍໄດ້ລະບຸເນື້ອໃນໃຫ້ຈະແຈ້ງເລີຍ ຄື ຖ້າເປົ້າໝາຍຖືກກວດສອບ ບໍ່ຕອບ, ບໍ່ມີຄຳເຫັນກັບຄືນ ຫລື ບໍ່ຍອມເຊັນບົດບັນທຶກຜົນການກວດສອບ ພາຍໃນກຳນົດເວລາສິບຫ້າວັນ ນັບແຕ່ໄດ້ຮັບບົດບັນທຶກຜົນກວດສອບເປັນຕົ້ນໄປ ຖືວ່າ ເຫັນດີນຳ ແລະ ບົດບັນທຶກດັ່ງກ່າວ ແມ່ນມີຜົນບັງຄັບໃຊ້ໄດ້ຕາມກົດໝາຍ ເພາະມີຂໍ້ມູນ ແລະ ຫລັກຖານຄົບຖ້ວນແລ້ວ;

4) ມາດຕາ 40 ກ່ຽວກັບການແກ້ໄຂຜົນການກວດສອບ ໄດ້ປັບປຸງໃຫ້ແຈ້ງຂຶ້ນກວ່າເກົ່າ ເຊິ່ງເບື້ອງຕົ້ນເປົ້າໝາຍຖືກກວດສອບ ຕ້ອງເປັນເຈົ້າການແກ້ໄຂກ່ອນ ແລະ ຕ້ອງແກ້ໄຂໃຫ້ສຳເລັດພາຍໃນເວລາ 1 ປີ, ຖ້າບໍ່ແກ້ໄຂ ໂດຍບໍ່ມີເຫດຜົນພຽງພໍ ຫລື ກວດສອບເຫັນ ມີຜົນເສຍຫາຍເກີນລະດັບທີ່ໄດ້ກຳນົດໄວ້ໃນມາດຕະຖານການກວດສອບແຫ່ງລັດ ອົງການກວດສອບແຫ່ງລັດ ມີສິດສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງແກ້ໄຂເປັນແຕ່ລະກໍລະນີ ຕາມກົດໝາຍ, ການແກ້ໄຂຜົນການກວດສອບ ເວົ້າລວມແລ້ວ ທຸກພາກສ່ວນທີ່ກ່ຽວຂ້ອງ ຕ້ອງປະສານກັນ, ສະໜອງຂໍ້ມູນ-ຂ່າວສານເຊິ່ງກັນແລະກັນ, ປຶກສາຫາລືກັນ ແລະ ຮ່ວມມືກັນແກ້ໄຂ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

5) ມາດຕາ 43 ກ່ຽວກັບສິດ ແລະ ໜ້າທີ່ ຂອງອົງການກວດສອບແຫ່ງລັດ ໄດ້ເພີ່ມເນື້ອໃນຂໍ້ 9 ໂດຍໄດ້ກຳນົດໃຫ້ ອົງການກວດສອບແຫ່ງລັດ ຄຸ້ມຄອງລາຍຮັບວິຊາການຈາກວຽກງານກວດສອບຕາມລະບຽບການ ເພື່ອມອບເຂົ້າງົບປະມານແຫ່ງລັດ ດ້ວຍການຈັດຜ່ານລະບົບບັນຊີລວມສູນຄັງເງິນແຫ່ງຊາດ ແນໃສ່ປະກອບສ່ວນສ້າງລາຍຮັບໃຫ້ງົບປະມານແຫ່ງລັດ ແລະ ແກ້ໄຂຂໍ້ຫຍຸ້ງຍາກທາງດ້ານງົບປະມານ ແລະ ຂໍ້ 19 ເພື່ອສ້າງເງື່ອນໄຂໃນການຊຸກຍູ້, ສົ່ງເສີມສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານກວດສອບແຫ່ງລັດ ໂດຍໃຫ້ອົງການກວດສອບແຫ່ງລັດໄດ້ຮັບງົບປະມານສ່ວນໃດໜຶ່ງ ຈາກການແກ້ໄຂຜົນການກວດສອບ ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ;

6) ແຕ່ມາດຕາ 73 ເຖິງມາດຕາ 83 ແມ່ນມາດຕາທີ່ສ້າງໃໝ່ ໂດຍໄດ້ກຳນົດບົດບາດ ແລະ ໜ້າວຽກຂອງບັນດາອົງການຈັດຕັ້ງສຳຄັນຂອງລັດ ທີ່ກ່ຽວຂ້ອງກັບວຽກງານກວດສອບແຫ່ງລັດ ແນໃສ່ເຮັດໃຫ້ວຽກງານ ໂດຍສະເພາະແມ່ນການແກ້ໄຂຜົນການກວດສອບ ມີປະສິດທິພາບ ແລະ ປະສິດທິຜົນ;

7) ມາດຕາ 88 ກ່ຽວກັບງົບປະມານຂອງອົງການກວດສອບແຫ່ງລັດ ໄດ້ປັບປຸງຄືນໃໝ່ ເພື່ອຮອງຮັບວຽກງານກວດສອບແບບກະທັນຫັນ ຫລື ຮີບດ່ວນ ຕາມການສະເໜີຂອງພາກສ່ວນທີ່ກ່ຽວຂ້ອງ ເຊິ່ງບໍ່ໄດ້ກຳນົດໄວ້ໃນແຜນເບື້ອງຕົ້ນ.